


# ສະຖິຕິການນຳເຂົ້າ ແລະ ສົ່ງອອກ
# ພາຍໃຕ້ສິດທິພິເສດທາງການຄ້າ
# ຂອງ ສປປ ລາວ
# ປະຈຳປີ 2019





ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ກະຊວງອຸດສາຫະກຳ ແລະ ການຄ້າ

ເດືອນ ພຶດສະພາ 2020

## ກະກຽມ ແລະ ຮຽບຮຽງໂດຍ

**ຄະນະຊີ້ນຳລວມ**

| | |
|---|---|
| ທ່ານ ສຸລິຍົນ ພິລາວົງ | ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ນາງ ມະນີວອນ ວົງໄຊ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ມົວວິໄຊ ປາລີ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |

**ຄະນະກວດແກ້ເນື້ອໃນ ແລະ ຮຽບຮຽງ**

| | |
|---|---|
| ທ່ານ ໄຊຍະສອນ ສີລິພົງ | ຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ໂພໄຊ ອິນທະບົວລີ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ພຸດທະສອນ ທອງມະນີ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

**ຄະນະອອກແບບ ແລະ ຈັດລຽງ**

| | |
|---|---|
| ທ່ານ ວຽງຄຳ ທິບຸນມາ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ທຸມດາວັນ ຄຳພາສິດ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ລອນຄຳ ຄຳດາລາວົງ | ວິຊາການ ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

**ຜູ້ເກັບກຳລາຍລະອຽດ ແລະ ວິເຄາະຂໍ້ມູນ**

| | |
|---|---|
| ທ່ານ ນາງ ສຸພາພອນ ທິບພະວົງ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

# ຄຳເຫັນຂອງ ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ມີນະໂຍບາຍເພີ່ມທະວີສາຍພົວພັນຮ່ວມມືລະຫວ່າງ ສປປ ລາວ ກັບບັນດາປະເທດຕ່າງໆໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ ໂດຍແນໃສ່ເພີ່ມທະວີສາຍພົວພັນທາງດ້ານເສດ ຖະກິດ - ການຄ້າ ໂດຍເຂົ້າຮ່ວມເປັນພາຄີສັນຍາ, ສົນທິສັນຍາການຄ້າຕ່າງໆ ທັງໃນຂອບສອງຝ່າຍ, ພາກພື້ນ ແລະ ສາກົນ. ສປປ ລາວ ໄດ້ມີການພົວພັນກັບຄູ່ຮ່ວມມືຍຸດທະສາດ ແລະ ຄູ່ຮ່ວມມືຮອບດ້ານກັບຫຼາຍປະເທດ ເປັນຕົ້ນແມ່ນ ບັນດາປະເທດເພື່ອນບ້ານໃກ້ຄຽງ, ບັນດາປະເທດສະມາຊິກອາຊຽນ, ພາກພື້ນ ແລະ ສາກົນ ທີ່ນັບມື້ໄດ້ຮັບການປັບປຸງເປີດກວ້າງ ແລະ ເຂົ້າສູ່ລວງເລິກ. ທັງເປັນເຈົ້າການ ແລະ ຕັ້ງໜ້າໃນການເຂົ້າຮ່ວມວຽກງານລວມຂອງປະຊາຄົມໂລກ, ໃນບັນດາເວທີປາໄສ, ບັນດາອົງການຈັດຕັ້ງພາກພື້ນ ແລະ ສາກົນ ໂດຍຍົກສູງຖານະບົດບາດຂອງປະເທດ.ໃນປະຈຸບັນ ສປປ ລາວ ໄດ້ຮັບສິດທິພິເສດທາງການຄ້າຈາກທັງໝົດ 57 ປະເທດ ແລະ ເຂດປົກຄອງພິເສດຮົງກົງ ແລະ ໄຕ້ຫວັນ. ສິດທິພິເສດທາງການຄ້າປະກອບມີ 02 ແບບດ້ວຍກັນຄື: ສິດທິພິເສດທາງການຄ້າແບບຝ່າຍດຽວ (Gerneralized System of Preferences ຫຼື GSP) ແລະ ສິດທິພິເສດທາງການຄ້າແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ (Free Trade Area: FTA).

ສປປ ລາວ ໄດ້ຮັບສິດທິພິເສດທາງການຄ້າແບບຝ່າຍດຽວຈາກ 42 ປະເທດປະກອບດ້ວຍ: ສະຫະ ພາບເອີຣົບ ຫຼື ອີຢູ 28 ປະເທດ, ສະວິດເຊີແລນ, ການາດາ, ອົດສະຕາລີ, ນິວຊີແລນ, ຕວກກີ, ນອກແວ, ລັດເຊຍ, ເບລາຣຸສ, ກາຊັກສະຖານ, ຍີ່ປຸ່ນ, ຈີນ, ສ ເກົາຫຼີ, ອິນເດຍ ແລະ ໄຕ້ຫວັນ. ສິດທິພິເສດທາງການຄ້າແບບຕອບແທນກັນ ຫຼື ພາຍໃຕ້ຂອບສັນຍາການຄ້າເສລີ ມີສັນຍາທັງໝົດຈຳນວນ 09 ສະບັບລວມມີ 15 ປະເທດ ແລະ ເຂດປົກຄອງພິເສດຮົງກົງ ຄື: ສະມາຊິກອາຊຽນ (ບູໄນ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ຟີລິປິນ, ສິງກະໂປ, ກຳປູເຈຍ, ໄທ, ມຽນມາ ແລະ ຫວຽດນາມ), ປະເທດຄູ່ຮ່ວມ ຈີນ, ສ ເກົາຫຼີ, ຍີ່ປຸ່ນ, ອິນ ເດຍ, ອົດສະຕາລີ, ນິວຊີແລນ ແລະ ເຂດປົກຄອງພິເສດຮົງກົງ.

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສ້າງປຶ້ມສະຖິຕິການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2019. ການສັງລວມສະຖິຕິໄດ້ສະແດງໃຫ້ເຫັນວ່າ ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າກວມເອົາ 22.65% ຂອງມູນຄ່າການສົ່ງອອກທັງໝົດ, ສ່ວນການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າແມ່ນ ກວມເອົາພຽງ 11.60% ຂອງການນຳເຂົ້າທັງໝົດ. ຈາກຂໍ້ມູນດັ່ງກ່າວເຫັນໄດ້ວ່າ ສິດທິພິເສດທາງການຄ້າໄດ້ເປີດໂອກາດໃຫ້ແກ່ຜູ້ປະກອບການຢູ່ ສປປ ລາວ ສາມາດເຂົ້າເຖິງຕະຫຼາດຂອງບັນດາປະເທດທີ່ກ່າວມານັ້ນຢ່າງເປັນລະບົບ. ປຶ້ມສະຖິຕິຫົວນີ້ໄດ້ສ້າງຂຶ້ນມາດ້ວຍຄວາມເອົາໃຈ ໃສ່, ແນໃສ່ເພື່ອໃຫ້ຜູ້ນຳໃຊ້ເຂົ້າເຖິງຂໍ້ມູນຕ່າງໆ ແລະ ສາມາດນຳໃຊ້ໄດ້ຮັບຜົນປະໂຫຍດສູງສຸດ.

ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ໃຫ້ການຮ່ວມມືໃນການສະໜອງຂໍ້ມູນສະຖິຕິໃນຄັ້ງນີ້ ໂດຍສະເພາະແມ່ນ ສະຖິຕິສິດທິພິເສດທາງການຄ້າຂາອອກຈາກ 39 ຫ້ອງການເຈົ້າໜ້າຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ກໍ່ຍັງໄດ້ຮັບການສະໜອງສະຖິຕິການນຳເຂົ້າ ແລະ ສົ່ງອອກຈາກ ກົມພາສີ, ກະຊວງການເງິນ ແລະ ຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່.

ຂ້າພະເຈົ້າ ຫວັງເປັນຢ່າງຍິ່ງວ່າຂໍ້ມູນນີ້ຈະນຳປະໂຫຍດອັນສູງສຸດມາສູ່ບັນດາທ່ານ ທັງພາກລັດ ແລະ ເອກະຊົນໃນການຈັດຕັ້ງຜັນຂະຫຍາຍໃນຂົງເຂດວຽກງານຂອງຕົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາວຽກງານການຄ້າ ແລະ ການລົງທຶນ. ພ້ອມກັນນັ້ນ, ຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ພວກເຮົາຂໍອະໄພມາຍັງນະທີ່ນີ້ດ້ວຍ ແລະ ມີຄວາມຍິນດີຮັບເອົາຄຳຕຳນິຕິຊົມຈາກບັນດາທ່ານ ເພື່ອນຳໄປປັບປຸງໃນການສ້າງປຶ້ມສະຖິຕິສະບັບຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2020

**ຫົວໜ້າກົມ**

**ສຸລິຍົນ ພິລາວົງ**

## ບັນຊີລາຍຊື່ຂອງຕົວອັກສອນຫຍໍ້

REX: Registered Exporter System ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ

SCPP2: The Second ASEAN Self-Certification Pilot Project ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງທີ II ຂອງອາຊຽນ

Form A: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (Generalized System of Preferences: GSP) ສໍາລັບຜະລິດຕະພັນທົ່ວໄປ

Form D: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ASEAN Trade in Goods Agreement: ATIGA)

Form E: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ຈີນ (ASEAN - China Free Trade Area: ACFTA)

Form S: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກໍາເນີດສິນຄ້ານໍາໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນໍາເຂົ້າ - ສົ່ງອອກ ສປປ ລາວ - ສສ.ຫວຽດນາມ

Form SPT: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Special Preferential Tariff Treatment: SPT)

Form AI: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ອິນເດຍ (ASEAN - India Free Trade Area: AIFTA)

Form AK: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ສ ເກົາຫຼີ (ASEAN - Korea Free Trade Area: AKFTA)

Form AJ: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຍີ່ປຸ່ນ (The Agreement on Comprehensive Economic Partnership Among Member State of the Association of Southeast Asian Nation and Japan: AJCEP)

Form AANZ: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (Agreement Establishing the ASEAN - Australia - New Zealand Free Trade Area: AANZFTA)

Form DFTP: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: DFTP)

Form APTA: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາການຄ້າອາຊີ - ປາຊີຟິກ (Asia - Pacific Trade Agreement: APTA)

CO-Korea: ແບບພິມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Certificate of Origin for Preferential Tariff for Least Developed Countries: CO-Korea)

GSP: Generalized System of Preferences ສິດທິພິເສດທາງການຄ້າແບບຝ່າຍດຽວ

FTA: Free Trade Agreement ສິດທິພິເສດທາງການຄ້າແບບຕອບແທນກັນ

# ສາລະບານ ໜ້າ


1. ພາບລວມການນຳເຂົ້າ-ສົ່ງອອກສິນຄ້າ ຂອງປີ 2018 ຫາ 2019……………………………….1

2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ…………………………………………… 2

2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ…………………………………………. 2

2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ……………………………….. 4

2.3 ປະເພດແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ (Certificate of Origin: CO) ……………………………………………………………………………………5

2.3.1 ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະ ພາບເອີຣົບ (Registered Export System: REX)…………………………………7

2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ…………………………….....9

2.3.3 ສິດທິພິເສດທາງການຄ້າແບບຝ່າຍດຽວ (GSP) ສຳລັບຜະລິດຕະພັນທົ່ວໄປ (Form A)...... 11

2.3.4 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (Form D)……………. 13

2.3.5 ສັນຍາພາຍໃຕ້ເຂດການຄ້າເສລີອາຊຽນ - ຈີນ (Form E)……………………………… 15

2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S)……………………………………………16

2.3.7 ສິດທິພິເສດການຄ້າແບບຝ່າຍດຽວຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Form SPT)…..18

2.3.8 ສັນຍາການຄ້າເສລີ ອາຊຽນ - ອິນເດຍ (Form AI)……………………………….....18

2.3.9 ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)…..……………………………...20

2.3.10 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ອາຊຽນ-ຍີ່ປຸ່ນ (Form AJ) ……………22

2.3.11 ສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)……………………24

2.3.12 ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)…………………………......……..26

2.3.13 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea)……..………26

3. ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ……………………………………..……28

3.1 ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ…………………………………………28

3.2 ລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ……………………………….30

4. ເອກະສານຊ້ອນທ້າຍ…………………..………………………………..…………31

- ເອກະສານຊ້ອນທ້າຍທີ 01 ຕາຕະລາງລາຍການສິນຄ້າທີ່ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2018-2019……...…………………………………………………………………….......32
- ເອກະສານຊ້ອນທ້າຍທີ 02 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ປະຈຳປີ 2019……..……………………………………........57
- ເອກະສານຊ້ອນທ້າຍທີ 03 ການສົ່ງອອກຂອງ ສປປ ລາວ ໂດຍການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງ ອາຊຽນ ປະຈຳປີ 2019 ……………………………………………………………..……79
- ເອກະສານຊ້ອນທ້າຍທີ 04 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນທົ່ວໄປ (Form A) ປະຈຳປີ 2019.............................................80
- ເອກະສານຊ້ອນທ້າຍທີ 05 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA ຫຼື Form D) ປະຈຳປີ 2019...........................................................................84
- ເອກະສານຊ້ອນທ້າຍທີ 06 ການສົ່ງອອກຂອງ ສປປ ລາວ ໃຕ້ເຂດການຄ້າເສລີອາຊຽນ - ຈີນ (ACFTA ຫຼື Form E) ປະຈຳປີ 2019…………………….……………………………….…………98
- ເອກະສານຊ້ອນທ້າຍທີ 07 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S) ປະຈຳປີ 2019………………………………………………………………..……102
- ເອກະສານຊ້ອນທ້າຍທີ 08 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາສິດທິພິເສດທາງການຄ້າແບບຝ່າຍດຽວຈາກຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (Form SPT) ປະຈຳປີ 2019…………..…………105
- ເອກະສານຊ້ອນທ້າຍທີ 09 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI) ປະຈຳປີ 2019…………………………………………………………………106
- ເອກະສານຊ້ອນທ້າຍທີ 10 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK) ປະຈຳປີ 2019………………………………………………………………..108
- ເອກະສານຊ້ອນທ້າຍທີ 11 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ (Form AJ) ປະຈຳປີ 2019…………................................................................111
- ເອກະສານຊ້ອນທ້າຍທີ 12 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (Form AANZ) ປະຈຳປີ 2019.................................................................113
- ເອກະສານຊ້ອນທ້າຍທີ 13 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea) ປະຈຳປີ 2019........................................................114
- ເອກະສານຊ້ອນທ້າຍທີ 14 ຕາຕະລາງລາຍການສິນຄ້າທີ່ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2018 - 2019.............................................................................................115

## 1. ພາບລວມການນຳເຂົ້າ ແລະ ສົ່ງອອກສິນຄ້າ ແຕ່ປີ 2018 ຫາ 2019

ການນຳເຂົ້າ ແລະ ສົ່ງອອກ ສິນຄ້າຂອງ ສປປ ລາວ ປະກອບດ້ວຍ 02 ຮູບແບບຄື: ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ການນຳເຂົ້າ ແລະ ສົ່ງອອກແບບທີ່ໄດ້ຮັບສິດທິພິເສດທາງການຄ້າ (ການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີ). ໃນນັ້ນ, ການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ແບ່ງອອກເປັນ 02 ຮູບແບບຄື: ແບບຝ່າຍດຽວ[1] ແລະ ແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ[2].

ສຳລັບການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ຂອງ ສປປ ລາວ ປະຈຳປີ 2019 ໂດຍອີງຕາມຂໍ້ມູນທີ່ໄດ້ຮັບຈາກ ກົມພາສີ, ກະຊວງການເງິນ ແລະ ຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່ ໃນປີນີ້ ເຫັນວ່າການສົ່ງອອກແບບທົ່ວໄປ (ທັງໝົດ) ສາມາດບັນລຸ 5,864,139,193.45 ໂດລາສະຫະລັດ ເມື່ອທຽບໃສ່ການນຳເຂົ້າແບບທົ່ວໄປ (ທັງໝົດ) 5,740,554,691.30 ໂດລາສະຫະລັດ. ອີງໃສ່ຕົວເລກຂ້າງເທິງ ເຫັນວ່າການສົ່ງອອກ ຂອງ ສປປ ລາວ ໃນປີ 2019 ແມ່ນເກີນດຸນການຄ້າ 123,584,502.15 ໂດລາສະຫະລັດ. ສາເຫດທີ່ພາໃຫ້ເກີນດຸນອາດແມ່ນ ຍ້ອນຈາກມູນຄ່າການສົ່ງອອກທັງໝົດ ປີ 2019 ເຫັນວ່າ ໄຟຟ້າ ມີມູນຄ່າສົ່ງອອກສູງເຖິງ 1,326,855,287 ໂດລາສະຫະລັດ ກວມເອົາ 12% ຂອງມູນຄ່າການສົ່ງອອກທັງໝົດ. ດັ່ງນັ້ນ, ຖ້າຫາກບໍ່ລວມເອົາຕົວເລກ ມູນຄ່າການສົ່ງອອກໄຟຟ້າ ຈະເຫັນໄດ້ຊັດເຈນວ່າ ສປປ ລາວ ຂາດດຸນການຄ້າ -1,203,270,784.85 ໂດລາສະຫະລັດ, ມູນຄ່າການສົ່ງອອກເພີ່ມຂຶ້ນເຖິງ 8.40%. ສ່ວນມູນຄ່າການສົ່ງອອກສິນຄ້າປະເພດອື່ນກໍ່ເພີ່ມຂຶ້ນໃນຈັງຫວະປົກກະຕິ. ມູນຄ່າການນຳເຂົ້າມີທ່າອ່ຽງຫຼຸດລົງເຖິງ -4.7%. ສາເຫດອາດເນື່ອງມາຈາກ ລັດຖະບານໄດ້ມີນະໂຍບາຍຢຸດຕິ ແລະ ກວດກາຄືນການກໍ່ສ້າງ ເຊັ່ນ: ໂຄງການຂຸດຄົ້ນບໍ່ແຮ່ ແລະ ໂຄງການເຂື່ອນໄຟຟ້າຈຳນວນໜຶ່ງນີ້ກໍ່ອາດເປັນສາເຫດພາໃຫ້ມີການນຳເຂົ້າອຸປະກອນກໍ່ສ້າງບາງປະເພດຫຼຸດລົງ ເຊັ່ນ: ຊີມັງ ຫຼຸດລົງ -27.4%, ເຫຼັກເສັ້ນ ແລະ ເຫຼັກຮູບປະພັນຕ່າງໆຫຼຸດລົງເຖິງ -26.8%. ເຖິງແມ່ນວ່າ ສປປ ລາວ ມີການສົ່ງອອກຫຼາຍຈົນມີການເກີນດຸນທາງດ້ານການຄ້າ ແຕ່ບໍ່ໄດ້ໝາຍຄວາມວ່າ ສປປ ລາວ ຈະໄດ້ຮັບເງິນຕາຕາມມູນຄ່າທີ່ສົ່ງອອກ (ແຈ້ງຜ່ານດ່ານພາສີ), ຍ້ອນວ່າສິນຄ້າບາງປະເພດທີ່ສົ່ງອອກມີມູນຄ່າສົ່ງອອກຫຼາຍແຕ່ລາຍຮັບດັ່ງກ່າວບໍ່ໄດ້ໂອນເງິນເຂົ້າມາລາວ ຫຼື ເຂົ້າມາໜ້ອຍ ຍ້ອນວ່າເປັນຂໍ້ຜູກພັນທາງສັນຍາລະຫວ່າງລັດຖະບານກັບຜູ້ລົງທຶນ ໂດຍລັດຖະບານຖືກແບ່ງປັນລາຍຮັບຈາກການສົ່ງອອກພຽງແຕ່ 20% ຫຼື 25% ເທົ່ານັ້ນ, ສ່ວນທີ່ເຫຼືອແມ່ນຕົກເປັນຂອງຜູ້ລົງທຶນ ເຊັ່ນ: ໂຄງການເຂື່ອນໄຟຟ້າ ແລະ ບໍ່ແຮ່.

ສຳລັບການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນໄລຍະປີ 2018 ຫາ 2019 ແມ່ນມີມູນຄ່າສູງພໍສົມຄວນ ຄື: 1,312,291,384.70 ໂດລາສະຫະລັດ ແລະ 1,328,510,861.09 ໂດລາສະຫະລັດ ຕາມລຳດັບ. ຊຶ່ງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄດ້ກວມເອົາອັດຕາສ່ວນຂອງການສົ່ງອອກທັງໝົດຫຼາຍພໍສົມຄວນຄື: 24.30% ແລະ 22.65% ຕາມລຳດັບ. ສ່ວນເບື້ອງການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນປີ 2018 ຫາ 2019 ແມ່ນມີມູນຄ່າ 631,832,419.00 ໂດລາສະຫະລັດ ແລະ 665,920,272.34 ໂດລາສະຫະລັດ ຕາມລຳດັບ, ເຫັນວ່າ ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າກວມເອົາພຽງແຕ່ 10.80% ແລະ 11.60% ຂອງມູນຄ່າການນຳເຂົ້າທັງໝົດ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 01)

[1] ສິດທິພິເສດແບບຝ່າຍດຽວ (Generalized System of Preferences ຫຼື GSP)

[2] ສິດທິພິເສດແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ (Free Trade Area ຫຼື FTA)

**ຕາຕະລາງ 01:** ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ພາຍໃຕ້ສິດທິພິເສດທາງການຄ້າ ປີ 2018 ຫາ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍການ | 2019 | 2018 |
|---|---|---|---|
| I | **ການສົ່ງອອກ** | | |
| 1 | ການສົ່ງອອກແບບທົ່ວໄປ (ທັງໝົດ) | 5,864,139,193.45 | 5,410,100,000.00 |
| 2 | ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 1,328,510,861.09 | 1,312,291,384.70 |
| 3 | ອັດຕາສ່ວນ | 22.65% | 24.30% |
| II | **ການນຳເຂົ້າ** | | |
| 1 | ການນຳເຂົ້າແບບທົ່ວໄປ (ທັງໝົດ) | 5,740,554,691.30 | 5,848,000,000.00 |
| 2 | ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 665,920,272.34 | 631,832,419.00 |
| 3 | ອັດຕາສ່ວນ | 11.60% | 10.80% |

**ແຫຼ່ງຂໍ້ມູນ**: ກົມພາສີ ກະຊວງການເງິນ, ຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

## 2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

### 2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2019 ສປປ ລາວ ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າທັງໝົດຈຳນວນ 38 ປະເທດ. ໃນນັ້ນ, ປະເທດທີ່ສົ່ງອອກໄປຫຼາຍກວ່າໝູ່ແມ່ນ ໄທ, ຈີນ ແລະ ຫວຽດນາມ; ມີມູນຄ່າການສົ່ງອອກສູງເຖິງ 361,747,510.52 ໂດລາສະຫະລັດ, 322,772,702.82 ໂດລາສະຫະລັດ ແລະ 312,781,407.36 ໂດລາສະຫະລັດ ຕາມລຳດັບ. ເມື່ອສົມທຽບກັບປີ 2018 ທີ່ຜ່ານມາເຫັນວ່າ ມູນຄ່າການສົ່ງອອກໄປຍັງປະເທດຕົ້ນຕໍນັ້ນມີພຽງແຕ່ການສົ່ງອອກໄປ ປະເທດຈີນ ທີ່ເພີ່ມສູງຂຶ້ນ 28.62%, ສ່ວນການສົ່ງອອກໄປ ປະເທດໄທ ແລະ ຫວຽດນາມ ແມ່ນມີເປີເຊັນຫຼຸດລົງຫຼາຍສົມຄວນ -15.06% ແລະ -6.03% ຕາມລຳດັບ. ໃນນັ້ນ, ປະເທດທີ່ມີການສົ່ງອອກໄປໜ້ອຍທີ່ສຸດໃນປີນີ້ແມ່ນ ໂຣມາເນຍ, ນໍເວ ແລະ ຟິນແລນ; ຊຶ່ງມີມູນຄ່າພຽງ 21,620.00 ໂດລາສະຫະລັດ, 5,516.00 ໂດລາສະຫະລັດ ແລະ 1,740.00 ໂດລາສະຫະລັດ ຕາມລຳດັບ. ສຳລັບປະເທດທີ່ມີປະລິມານການສົ່ງອອກເພີ່ມຂຶ້ນຫຼາຍທີ່ສຸດໃນປີ 2019 ນີ້ແມ່ນ ໂປໂລຍ, ກຣີຊ ແລະ ອິດສະຕາລີ; ເພີ່ມຂຶ້ນ 41.85 ເທົ່າ, 26.48 ເທົ່າ ແລະ 3.47 ເທົ່າ ຕາມລຳດັບ.

ນອກຈາກນັ້ນ, ຍັງສັງເກດເຫັນວ່າ ໃນປີ 2019 ເຫັນວ່າ ມີຫຼາຍປະເທດທີ່ມີການສົ່ງອອກໃໝ່ ເຊັ່ນວ່າ: ພະມ້າ, ໂຣມາເນຍ, ນໍເວ ແລະ ຟິນແລນ. ໃນຂະນະດຽວກັນ, ບັນດາປະເທດທີ່ມີການສົ່ງອອກໃນປີ 2018 ແຕ່ປີ 2019 ແມ່ນບໍ່ມີການສົ່ງອອກໄດ້ແກ່ ອູເກຣນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 02)

**ຕາຕະລາງ 02:** ປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2018 ແລະ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍຊື່ປະເທດ | ມູນຄ່າສົ່ງອອກ (2019) | ມູນຄ່າສົ່ງອອກ (2018) | ສົມທຽບ (%) |
|---|---|---|---|---|
| 1 | ໄທ | 361,747,510.52 | 425,866,333.80 | (15.06) |
| 2 | ຈີນ | 322,772,702.82 | 250,952,145.90 | 28.62 |
| 3 | ຫວຽດນາມ | 312,781,407.36 | 332,857,121.55 | (6.03) |
| 4 | ເຢຍລະມັນ | 96,646,947.23 | 78,949,205.82 | 22.42 |
| 5 | ອີຕາລີ | 36,728,286.22 | 14,185,987.10 | 158.91 |
| 6 | ຍີ່ປຸ່ນ | 29,440,335.90 | 78,779,898.23 | (62.63) |
| 7 | ອັງກິດ | 25,506,866.89 | 21,612,173.68 | 18.02 |
| 8 | ສະວີເດນ | 21,757,904.28 | 23,285,441.82 | (6.56) |
| 9 | ໂປໂລຍ | 19,076,671.33 | 435,031.60 | 4,285.12 |
| 10 | ແບນຊິກ | 14,195,609.17 | 13,157,813.80 | 7.89 |
| 11 | ໂຮນລັງ | 13,630,385.56 | 6,544,578.97 | 108.27 |
| 12 | ດານມາກ | 12,825,575.35 | 11,860,600.69 | 8.14 |
| 13 | ປອກຕຸຍການ | 11,886,575.29 | 4,091,900.89 | 190.49 |
| 14 | ກຣີວຊີ | 6,870,615.00 | 250,000.00 | 2,648.25 |
| 15 | ຟີລິບປິນ | 6,434,627.00 | 8,912,778.41 | (27.80) |
| 16 | ຕວັກກີ | 5,827,462.00 | 4,523,090.00 | 28.84 |
| 17 | ກຳປູເຈຍ | 5,200,731.50 | 4,086,415.94 | 27.27 |
| 18 | ຝຣັ່ງ | 4,705,230.57 | 7,920,867.40 | (40.60) |
| 19 | ສ ເກົາຫຼີ | 4,590,282.48 | 4,980,229.00 | (7.83) |
| 20 | ອົດສະຕາລີ | 3,670,721.30 | 819,939.76 | 347.68 |
| 21 | ອິນໂດເນເຊຍ | 2,930,735.48 | 947,900.45 | 209.18 |
| 22 | ມາເລເຊຍ | 1,920,103.38 | 7,149,644.42 | (73.14) |
| 23 | ແອັສປາຍ | 1,692,398.02 | 2,616,795.86 | (35.33) |
| 24 | ອິນເດຍ | 2,364,637.54 | 4,870,836.55 | (51.45) |
| 25 | ເຊັກ | 1,039,727.95 | 230,344.60 | 351.38 |
| 26 | ສ ອາເມລິກາ | 663,709.50 | 861,609.00 | (22.97) |
| 27 | ເກຼັກ | 501,357.30 | 58,559.00 | 756.16 |
| 28 | ການາດາ | 198,271.80 | 89,307.03 | 122.01 |
| 29 | ໂອຕຣິສ | 196,437.67 | 356,138.58 | (44.84) |
| 30 | ພະມ້າ | 186,546.00 | - | - |

| ລ/ດ | ລາຍຊື່ປະເທດ | ມູນຄ່າສົ່ງອອກ (2019) | ມູນຄ່າສົ່ງອອກ (2018) | ສົມທຽບ (%) |
|---|---|---|---|---|
| 31 | ອຽກລັງ | 138,346.90 | 462,615.60 | (70.09) |
| 32 | ບູນກາລີ | 135,150.00 | 99,000.00 | 36.52 |
| 33 | ສິງກະໂປ | 123,826.50 | 196,447.76 | (36.97) |
| 34 | ສະວິດເຊີແລນ | 67,349.03 | 82,951.71 | (18.81) |
| 35 | ນິວຊີແລນ | 26,940.26 | 183,223.80 | (85.30) |
| 36 | ໂຣມາເນຍ | 21,620.00 | - | - |
| 37 | ນໍເວ | 5,516.00 | - | - |
| 38 | ຟິນແລນ | 1,740.00 | - | - |
| 39 | ອູເກຣນ | - | 14,456.00 | (100.00) |
| | **ລວມ** | **1,328,510,861.09** | **1,312,291,384.70** | **1.22** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

## 2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2019 ການສົ່ງອອກສິນຄ້າຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າ ໄດ້ຈັດລາຍການສິນຄ້າສົ່ງອອກເປັນກຸ່ມສິນຄ້າທັງໝົດມີຈຳນວນ 10 ກຸ່ມ ຄື: ສັດ, ຜະລິດຕະພັນແຮ່ທາດ, ພືດກະສິກຳ, ຫັດຖະກຳ, ອຸດສາຫະກຳ, ເຄື່ອງປ່າຂອງດົງ, ແກ້ວປະເສີດອື່ນໆ, ແຮ່ທາດ, ໄຟຟ້າ ແລະ ໄມ້ ແລະ ຜະລິດຕະພັນໄມ້. ໃນນັ້ນ, ມີລາຍການສິນຄ້າສົ່ງອອກທັງໝົດ ຈຳນວນ 236 ລາຍການ, ລວມມູນຄ່າການສົ່ງອອກທັງໝົດແມ່ນ 1,328,510,861.09 ໂດລາສະຫະລັດ. ໃນນັ້ນ, ສັງເກດເຫັນວ່າ ກຸ່ມສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ 03 ອັນດັບທຳອິດແມ່ນ ກຸ່ມອຸດສາຫະກຳ ທີ່ມີມູນຄ່າການສົ່ງອອກສູງສຸດເຖິງ 698,963,776.99 ໂດລາສະຫະລັດ, ຮອງລົງມາແມ່ນ ກຸ່ມພືດກະສິກຳ ມີມູນຄ່າ 362,334,906.88 ໂດລາສະຫະລັດ ແລະ ກຸ່ມໄມ້ ແລະ ຜະລິດຕະພັນໄມ້ ມີມູນຄ່າ 131,871,940.58 ໂດລາສະຫະລັດ. ນອກຈາກນັ້ນ, ຍັງສັງເກດເຫັນວ່າ ກຸ່ມສິນຄ້າທີ່ແນວໂນ້ມຫຼຸດລົງຈາກປີທີ່ຜ່ານມາແມ່ນ ກຸ່ມສິນຄ້າປະເພດ ສັດ ແລະ ຜະລິດຕະພັນແຮ່ທາດ ທີ່ມີມູນຄ່າການຫຼຸດລົງຫຼາຍເມື່ອທຽບໃສ່ປີທີ່ຜ່ານມາ. ການສົ່ງອອກສິນຄ້າຂອງກຸ່ມສັດ ໃນປີ 2018 ມີມູນຄ່າ 77,677,170.84 ໂດລາສະຫະລັດ ແຕ່ພໍມາຮອດປີ 2019 ເຫຼືອພຽງ 3,170,084.95 ໂດລາສະຫະລັດ ແລະ ການສົ່ງອອກສິນຄ້າໃນກຸ່ມຜະລິດຕະພັນແຮ່ທາດ ໃນປີ 2018 ມີມູນຄ່າການສົ່ງອອກສູງເຖິງ 83,364,266.47 ໂດລາສະຫະລັດ ພໍມາຮອດປີ 2019 ຫຼຸດລົງເຫຼືອພຽງ 48,877,686.39 ໂດລາສະຫະລັດ ເທົ່ານັ້ນ.

ເມື່ອສົມທຽບກຸ່ມສິນຄ້າສົ່ງອອກປະຈຳປີ 2019 ກັບ ປີ 2018 ເຫັນວ່າ ກຸ່ມສິນຄ້າທີ່ເພີ່ມຂຶ້ນຫຼາຍກວ່າໝູ່ໃນປີ 2019 ແມ່ນສິນຄ້າໃນ ກຸ່ມໄມ້ ແລະ ຜະລິດຕະພັນໄມ້ ທີ່ເພີ່ມຈາກ 25,437,082.43 ໂດລາສະຫະລັດ ມາເປັນ 131,871,940.58 ໂດລາສະຫະລັດ ໃນປີ 2019. ນອກຈາກນັ້ນ, ກໍ່ຍັງມີສິນຄ້າໃນກຸ່ມຕ່າງໆທີ່ມີມູນຄ່າສົ່ງອອກເພີ່ມຂຶ້ນເລັກໜ້ອຍ ເຊັ່ນ ກຸ່ມພືດສະສິກຳ, ກຸ່ມຫັດຖະກຳ, ກຸ່ມແກ້ວປະເສີດອື່ນໆ ແລະ ກຸ່ມແຮ່ທາດ. ສຳລັບກຸ່ມສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງປະກອບມີ: ກຸ່ມສັດ, ກຸ່ມຜະລິດຕະພັນແຮ່ທາດ, ກຸ່ມພືດກະສິກຳ, ກຸ່ມໂລຫະ ແລະ ເສດຕ່າງໆ ແລະ ກຸ່ມໄມ້ ແລະ ຜະລິດຕະພັນໄມ້.

(ລາຍລະອຽດສາມາດເບິ່ງຕາມເອກະສານຊ້ອນທ້າຍທີ 01)

## 2.3 ປະເພດແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ (Certificate of Origin ຫຼື CO)

ໃນປີ 2019 ສປປ ລາວ ໄດ້ສົ່ງອອກສິນຄ້າປະເພດຕ່າງໆ ໂດຍນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ ມີທັງໝົດຈຳນວນ 12 ແບບພິມ (Form) ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (Self-Certification). ໃນນັ້ນ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ປະກອບມີ 02 ໂຄງການຄື: ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ (The Second ASEAN Self-Certification Pilot Project ຫຼື SCPP2) ແລະ ການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ (Registered Exporter System ຫຼື REX). ຊຶ່ງວ່າ ຈຳນວນ Form ທີ່ໄດ້ຢັ້ງຢືນອອກໄປທັງໝົດໃນປີ 2019 ມີຈຳນວນ 23,214 ຊຸດ, ໂດຍສົ່ງອອກໄປທັງໝົດຈຳນວນ 38 ປະເທດ ທີ່ມີມູນຄ່າການສົ່ງອອກທັງໝົດ 1,328,510,861.09 ໂດລາສະຫະລັດ ເມື່ອສົມທຽບໃສ່ມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2018 ທີ່ມີມູນຄ່າການສົ່ງອອກ 1,312,291,384.70 ໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນເລັກໜ້ອຍພຽງ 1.24%.

ໃນໄລຍະ 01 ປີ ທີ່ຜ່ານມາເຫັນວ່າ Form ທີ່ມີການນຳໃຊ້ຫຼາຍກວ່າໝູ່ແມ່ນ Form D, E, ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ ແລະ Form S ຕາມລຳດັບ. ຊຶ່ງມູນຄ່າການສົ່ງອອກໃນປີ 2019 ມີຄື: ① Form D ມີມູນຄ່າ 505,936,624.64 ໂດລາສະຫະລັດ, ② Form E ມີມູນຄ່າ 322,747,702.82 ໂດລາສະຫະລັດ, ③ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ ມີມູນຄ່າ 268,880,867.86 ໂດລາສະຫະລັດ[3] ແລະ ④ Form S ມີມູນຄ່າ 134,186,615.08 ໂດລາສະຫະລັດ. ນອກຈາກນັ້ນ, ສັງເກດເຫັນວ່າ Form ທີ່ມີແນວໂນ້ມເພີ່ມຂຶ້ນຫຼາຍໃນປີນີ້ໄດ້ແກ່: Form DFTP, AANZ, CO-Korea, REX, E ແລະ APTA; ເປີເຊັນເພີ່ມຂຶ້ນຄື: 860.58%, 269.43%, 47.84% , 44.44% , 36.71% ແລະ 19.54% ຕາມລຳດັບ. ສຳລັບ Form ມີການນຳໃຊ້ຫຼຸດລົງຫຼາຍໃນປີນີ້ແມ່ນ: Form SPT, AJ, A (ສຳລັບຜະລິດຕະພັນທົ່ວໄປ), AI, S, D, AK ແລະ ASEAN Self Certification; ມີເປີເຊັນການຫຼຸດລົງ ຄື: -99.83%, -73.34%, -50.14%, -28.13% ແລະ -2.69% ຕາມລຳດັບ.

ນອກຈາກນັ້ນ, ເມື່ອສົມທຽບລະຫວ່າງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວ ແລະ ແບບຕອບແທນກັນ ເຫັນວ່າ ການນຳໃຊ້ສິດທິພິເສດແບບຝ່າຍດຽວແມ່ນມີມູນຄ່າພຽງ 327,920,081.68 ໂດລາສະຫະລັດ, ໃນຂະນະທີ່ການສົ່ງອອກແບບຕອບແທນກັນ ມີມູນຄ່າສົ່ງອອກສູງເຖິງ 1,000,590,779.41 ໂດລາສະຫະລັດ. ຊຶ່ງການສົ່ງອອກແບບຕອບແທນກັນກວມເອົາອັດຕາສ່ວນຫຼາຍຂອງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ສູງເຖິງ 75.32%.

[3] ສຳລັບຂໍ້ມູນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ໃນປີ 2019 ແມ່ນການນຳໃຊ້ການອອກດ້ວຍຕົນເອງຢ່າງເຕັມຮູບແບບຂອງໂຄງການດັ່ງກ່າວ, ຊຶ່ງທຸກບໍລິສັດທີ່ຕ້ອງການສົ່ງອອກໄປຍັງບັນດາປະເທດໃນສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ແມ່ນຕ້ອງໄດ້ນຳໃຊ້ລະບົບຢັ້ງຢືນດ້ວຍຕົນເອງເທົ່ານັ້ນ.

**ຕາຕະລາງ 03:** ແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າປະຈຳປີ 2018 ແລະ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ຊື່ຊະນິດແບບພິມ (Form) | ຈຳນວນແບບພິມ 2019 (ຊຸດ) | ຈຳນວນແບບພິມ 2018 (ຊຸດ) | ມູນຄ່າສົ່ງອອກ ປີ 2019 | ມູນຄ່າສົ່ງອອກ ປີ 2018 | ສົມທຽບ (%) |
|---|---|---|---|---|---|
| (Registered Exporter System: REX) | 6,622 | 5,622 | 268,880,867.86 | 186,154,750.71 | 44.44 |
| SCPP2 | 900 | 548 | 36,336,281.76 | 37,339,612.99 | (2.69) |
| A (ສຳລັບຜະລິດຕະພັນທົ່ວໄປ) | 251 | 764 | 19,411,064.81 | 38,927,371.02 | (50.14) |
| D | 10,022 | 11,485 | 505,936,624.64 | 552,517,342.37 | (8.43) |
| E | 1,780 | 1,252 | 322,747,702.82 | 236,076,305.90 | 36.71 |
| S | 2,460 | 2,379 | 134,186,615.08 | 161,227,183.21 | (16.77) |
| AI | 50 | 58 | 11,762,164.03 | 16,365,429.07 | (28.13) |
| AK | 235 | 304 | 6,248,257.96 | 6,551,619.44 | (4.63) |
| AJ | 403 | 295 | 15,968,867.33 | 59,889,596.04 | (73.34) |
| AANZ | 85 | 63 | 3,666,617.56 | 992,515.56 | 269.43 |
| APTA | 14 | 11 | 73,930.00 | 61,847.00 | 19.54 |
| CO-Korea | 372 | 180 | 1,698,532.31 | 1,148,701.40 | 47.87 |
| DFTP | 19 | 9 | 1,568,334.94 | 163,270.00 | 860.58 |
| SPT | 1 | 9 | 25,000.00 | 14,875,840.00 | (99.83) |
| **ລວມທັງໝົດ** | **23,214** | **22,979** | **1,328,510,861.09** | **1,312,291,384.70** | **1.24** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຮູບສະແດງ 01:** ແບບພິມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າປະຈຳປີ 2018 ແລະ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)




### 2.3.1 ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ (Registered Exporter System: REX)

ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງສະຫະພາບເອີຣົບ ແມ່ນຜູ້ສົ່ງອອກສິນຄ້າເປັນຜູ້ດຳເນີນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໂດຍນຳໃຊ້ໃບ Statement on Origin ປ່ຽນແທນ Form A ຕາມເງື່ອນໄຂ ແລະ ຂັ້ນຕອນຕ່າງໆ ທີ່ທາງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ເປັນຜູ້ກຳນົດ. ສປປ ລາວ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການທົດລອງນຳໃຊ້ລະບົບ REX ແຕ່ວັນທີ 01 ມັງກອນ 2017 ເປັນຕົ້ນມາ. ພໍມາຮອດວັນທີ 01 ມັງກອນ 2018 ແມ່ນເປັນການນຳໃຊ້ລະບົບ REX ຢ່າງເຕັມຮູບແບບ, ຊຶ່ງທຸກບໍລິສັດທີ່ຕ້ອງການນຳໃຊ້ສິດທິພິເສດທາງການຄ້າ ໃນການສົ່ງສິນຄ້າໄປຍັງບັນດາປະເທດໃນສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ຕ້ອງໄດ້ອອກຜ່ານລະບົບ REX ຊ່ອງທາງດຽວເທົ່ານັ້ນ.

ໃນປີ 2019 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆ ໂດຍນຳໃຊ້ລະບົບ REX ເຫັນວ່າ ມີມູນຄ່າການສົ່ງອອກສູງເຖິງ 268,880,867.86 ໂດລາສະຫະລັດ, ຊຶ່ງມີມູນຄ່າສົ່ງອອກສູງເປັນອັນດັບທີ 03 ຮອງຈາກມູນຄ່າການສົ່ງອອກຂອງ Form D ແລະ E. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຊຸດສູດສຳລັບຜູ້ຊາຍ (ລະຫັດພາສີ 6203) ມີມູນຄ່າສົ່ງອອກສູງເຖິງ 79,658,418.40 ໂດລາສະຫະລັດ, ຮອງລົງມາແມ່ນ ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ (ລະຫັດພາສີ 1701) ມີມູນຄ່າສົ່ງອອກ 53,938,275.00 ໂດລາສະຫະລັດ ແລະ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມີມູນຄ່າສົ່ງອອກ 20,830,647.01 ໂດລາສະຫະລັດ. ເມື່ອທຽບການສົ່ງອອກໃນປີ 2019 ໃສ່ກັບປີ 2018 ທີ່ຜ່ານມາເຫັນວ່າມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ (ລະຫັດພາສີ 1701) ເພີ່ມຂຶ້ນ 43.09 ເທົ່າ, ກາເຟ (ລະຫັດພາສີ 0901) ເພີ່ມຂຶ້ນ 12.29 ເທົ່າ ແລະ ເສື້ອເຊີດທ໌ສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6205) ເພີ່ມຂຶ້ນ 1.54 ເທົ່າ. ໃນຂະນະດຽວກັນ, ສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ເສື້ອຍືດຄໍມົນ (ລະຫັດພາສີ 6109) ຫຼຸດລົງ -12.62%, ໂສ້ງ

ຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6107) ຫຼຸດລົງ -12.01% ແລະ ເສື້ອກັນໜາວແບບເຈີຣ໌ຊີ (ລະຫັດພາສີ 6110) ຫຼຸດລົງ -11.35%.

ສຳລັບປະເທດທີ່ມີການສົ່ງອອກໂດຍນຳໃຊ້ລະບົບ REX ໃນປີ 2019 ທີ່ມີມູນຄ່າສົ່ງອອກຫຼາຍກວ່າໝູ່ 03 ອັນດັບແມ່ນ ເຢຍລະມັນ, ອີຕາລີ ແລະ ອັງກິດ. ຊຶ່ງມີມູນຄ່າການສົ່ງອອກ 96,646,947.23 ໂດລາສະຫະລັດ, 36,728,286.22 ໂດລາສະຫະລັດ ແລະ 25,506,866.89 ໂດລາສະຫະລັດ ຕາມລຳດັບ.

ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກຂອງໂຄງການດັ່ງກ່າວ ໃນປີ 2019 ກັບ 2018 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍແມ່ນ ໂປໂລຍ, ກຣີຊ ແລະ ປ໋ອກຕຸຍການ ໂດຍມີອັດຕາເພີ່ມຂຶ້ນແມ່ນ 42.85 ເທົ່າ, 26.48 ເທົ່າ ແລະ 1.90 ເທົ່າ ຕາມລຳດັບ. ສ່ວນປະເທດທີ່ມີເປີເຊັນການສົ່ງອອກຫຼຸດລົງມີພຽງ ສະວີເດນ ຫຼຸດລົງພຽງ -6.56% ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 04, 05 ແລະ ເອກະສານຊ້ອນທ້າຍທີ 02)

**ຕາຕະລາງ 04:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ປະຈຳປີ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 79,658,418.40 | 62,646,885.97 |
| 2 | 1701 | ນໍ້າຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນໍ້າຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 53,938,275.00 | 1,223,200.00 |
| 3 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 20,830,647.01 | 10,844,100.03 |
| 4 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 12,266,475.47 | 7,952,938.69 |
| 5 | 6211 | ຊຸດວອມກິລາ, ຊຸດສຳລັບຫຼິ້ນສະກີ ແລະ ຊຸດລອຍນໍ້າ; ເຄື່ອງນຸ່ງຫົ່ມອື່ນໆ. | 12,054,197.33 | 11,299,953.65 |
| 6 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 10,915,961.47 | 4,286,603.23 |
| 7 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 10,780,250.75 | 12,003,794.63 |
| 8 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 9,111,861.56 | 10,261,345.04 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 9 | 6107 | ໂສ້ງຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງນອນ, ຊຸດນຸ່ງ ນອນ, ເສື້ອຄຸມອາບນ້ຳ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 7,655,172.70 | 8,574,182.63 |
| 10 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອິນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍ່ຕາມ. | 7,031,792.86 | 528,768.00 |
| 11 | ອື່ນໆ | | 44,637,815.31 | 56,532,978.84 |
| **ລວມ** | | | **268,880,867.86** | **186,154,750.71** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 05:** ປະເທດສົ່ງອອກຫຼັກພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ປະຈຳປີ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ເຢຍລະມັນ | 96,646,947.23 | 78,949,205.82 |
| 2 | ອິຕາລີ | 36,728,286.22 | 14,185,987.10 |
| 3 | ອັງກິດ | 25,506,866.89 | 21,612,173.68 |
| 4 | ສະວີເດນ | 21,757,904.28 | 23,285,441.82 |
| 5 | ໂປໂລຍ | 19,076,671.33 | 435,031.60 |
| 6 | ແບນຊິກ | 14,195,609.17 | 13,157,813.80 |
| 7 | ໂຮນລັງ | 13,630,385.56 | 6,544,578.97 |
| 8 | ດານມາກ | 12,825,575.35 | 11,860,600.69 |
| 9 | ປ໋ອກຕຸຍການ | 11,886,575.29 | 4,091,900.89 |
| 10 | ກຣີວຊີ | 6,870,615.00 | 250,000.00 |
| 11 | ອື່ນໆ | 9,755,431.54 | 11,782,016.34 |
| **ລວມ** | | **268,880,867.86** | **186,154,750.71** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ (The Second ASEAN Self-Certification Pilot Project: SCPP2), ຊຶ່ງການຈັດຕັ້ງປະຕິບັດໂຄງການດັ່ງກ່າວແມ່ນ ຜູ້ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ສາມາດອອກໃບ Invoice Declaration ແທນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ Form D. ໂຄງການ SCPP2 ມີຈຸດປະສົງອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ ພາຍໃນບັນດາປະເທດສະມາຊິກອາຊຽນດ້ວຍກັນ. ໂຄງການດັ່ງກ່າວນອກຈາກຈະມີ

ສ່ວນໃນການຊຸກຍູ້ສົ່ງເສີມການເຄື່ອນຍ້າຍສິນຄ້າຢູ່ພາກພື້ນແລ້ວ, ຍັງເປັນການຊ່ວຍຜູ້ປະກອບການສົ່ງອອກໃນການຫຼຸດຜ່ອນຕົ້ນທຶນ ແລະ ເວລາອີກດ້ວຍ. ໂຄງການ SCPP2 ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ໃນວັນທີ 29/08/2012 ແລະ ມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 10/05/2013. ໃນນັ້ນ, ມີຈຳນວນ 05 ປະເທດສະມາຊິກອາຊຽນທີ່ເຂົ້າຮ່ວມໂຄງການດັ່ງກ່າວ ໄດ້ແກ່: ລາວ (01/01/2014), ອິນໂດເນເຊຍ (01/01/ 2014), ຟີລິບປິນ (01/01/2014), ໄທ (01/05/2015) ແລະ ຫວຽດນາມ (19/12/2014). ໃນປີ 2019 ບັນດາປະເທດພາຄີໄດ້ມີຈຳນວນບໍລິສັດທີ່ເຂົ້າຮ່ວມໂຄງການທັງໝົດ 168 ບໍລິສັດ; ອິນໂດເນເຊຍ 13 ບໍລິສັດ, ລາວ 11 ບໍລິສັດ, ຟີລິບປິນ 02 ບໍລິສັດ, ໄທ 147 ບໍລິສັດ ແລະ ຫວຽດນາມ 06 ບໍລິສັດ.

ໃນປີ 2019 ໂຄງການ SCPP2 ມີມູນຄ່າສົ່ງອອກທັງໝົດ 36,336,281.76 ໂດລາສະຫະລັດ ແລະ ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຕົ້ນຕໍແມ່ນ ມັນຕົ້ນ (ລະຫັດພາສີ 0714) ມີມູນຄ່າ 24,312,830.00 ໂດລາສະຫະລັດ, ຮອງລົງມາແມ່ນ ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານ ອື່ນໆ (ລະຫັດພາສີ 2202) ມີມູນຄ່າ 8,903,391.39 ໂດລາສະຫະລັດ ແລະ ເຂົ້າສາລີ (ລະຫັດພາສີ 1005) ມີມູນຄ່າການສົ່ງອອກ 784,560.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໃນປີ 2019 ກັບ ປີ 2018 ແລ້ວເຫັນວ່າ ຫຼຸດລົງພຽງເລັກໜ້ອຍ -2.76% ເທົ່ານັ້ນ. ສຳລັບສິນຄ້າທີ່ເລີ່ມມີການສົ່ງອອກໃໝ່ໃນປີ 2019 ແມ່ນໝວດເຄື່ອງຕັດຫຍິບ ແລະ ປະເທດທີ່ສົ່ງອອກພາຍໃຕ້ສັນຍານີ້ແມ່ນມີພຽງ ປະເທດໄທ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 06, 07 ແລະ ເອກະສານຊ້ອນທ້າຍທີ 03)

**ຕາຕະລາງ 06:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ທີ່ນຳໃຊ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອິນູລິນສູງ, ສົດ, ແຊ່ ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 24,312,830.00 | 12,551,520.00 |
| 2 | 2202 | ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານ ອື່ນໆ ຫຼື ແຕ່ງກິ່ນ ແລະ ເຄື່ອງດື່ມອື່ນໆບໍ່ມີທາດເຫຼົ້າ, ແຕ່ບໍ່ລວມເອົານ້ຳໝາກໄມ້ ຫຼື ນ້ຳພືດຜັກຂອງລະຫັດເຄົ້າ 20.09. | 8,903,391.39 | 17,885,188.30 |
| 3 | 1005 | ເຂົ້າສາລີ (ເຂົ້າໂພດ). | 784,560.00 | 265,200.00 |
| 4 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 728,498.60 | 929,303.59 |
| 5 | 6105 | ເສື້ອເຊີດທ໌ສຳລັບຜູ້ຊາຍ ຫຼື ເດັກຊາຍ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 471,313.46 | - |
| 6 | 6103 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອ ເບລ ເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງ ນຸ່ງອາບນ້ຳ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 459,525.86 | - |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 7 | 6402 | ເກີບອື່ນໆ ທີ່ມີພື້ນນອກ ແລະ ຂ້າງເທິງຂອງເກີບເຮັດດ້ວຍຢາງ ຫຼື ພລາສຕິກ. | 425,680.30 | - |
| 8 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 147,715.96 | - |
| 9 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 76,625.19 | - |
| 10 | 6405 | ເກີບອື່ນໆ. | 11,237.00 | 37,383.50 |
| 11 | ອື່ນໆ | | 14,904.00 | 5,671,017.60 |
| ລວມ | | | 36,336,281.76 | 37,339,612.99 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

ຕາຕະລາງ 07: ປະເທດສົ່ງອອກຫຼັກຂອງ ສປປ ລາວ ທີ່ນຳໃຊ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ໄທ | 36,336,281.76 | 32,143,112.99 |
| 2 | ຫວຽດນາມ | - | 5,196,500.00 |
| ລວມ | | 36,336,281.76 | 37,339,612.99 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.3 ສິດທິພິເສດທາງການຄ້າແບບຝ່າຍດຽວ (GSP) ສຳລັບຜະລິດຕະພັນທົ່ວໄປ (Form A)

ໃນປີ 2019 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆ ໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດແກ່ ສປປ ລາວ ແບບຝ່າຍດຽວ ໂດຍນຳໃຊ້ Form A ໄດ້ແກ່: ການາດາ, ອິດສະຕາລີ, ນິວຊີແລນ, ຕວັກກີ, ນໍເວ, ລັດເຊຍ, ເບລາຣຸສ, ກາຊັກສະຖານ, ຍີ່ປຸ່ນ, ສ ອາເມລິກາ[4]. ໃນປີ 2019 ມູນຄ່າການສົ່ງອອກທັງໝົດໃນຂອບສັນຍານີ້ມີພຽງ 19,411,064.81 ໂດລາສະຫະລັດ ເມື່ອທຽບໃສ່ ປີ 2018 ທີ່ມີມູນຄ່າການສົ່ງອອກສູງເຖິງ 38,927,371.02 ໂດລາສະຫະລັດ ເຫັນວ່າ ມູນຄ່າການສົ່ງອອກໃນປີ 2019 ຫຼຸດລົງຫຼາຍສົມຄວນເຖິງ -50.14%. ສາເຫດທີ່ພາໃຫ້ການນຳໃຊ້ Form A ຫຼຸດລົງຍ້ອນວ່າ ການສົ່ງອອກໄປ ບັນດາປະເທດໃນສະພາບເອີຣົບ, ນໍເວ, ສະວິດເຊີແລນ ແລະ ຕວັກກີ ແມ່ນຜູ້ສົ່ງອອກສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໂດຍຜ່ານລະບົບ REX ຊ່ອງທາງດຽວເທົ່ານັ້ນ. ນອກຈາກນັ້ນ, ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດບາງປະເທດແມ່ນບໍ່ຕ້ອງການ Form A ແຕ່ວ່າຜູ້ສົ່ງອອກຕ້ອງສາມາດບັນລຸເງື່ອນໄຂທີ່ປະເທດຜູ້ນຳເຂົ້າກຳນົດຂຶ້ນໃນແຕ່ໄລຍະ ເປັນຕົ້ນແມ່ນ ການາດາ, ສ ອາເມລິກາ ແລະ ອື່ນໆ.

[4] ສຳລັບ ສະຫະລັດອາເມລິກາ ແມ່ນບໍ່ຕ້ອງການ Form A. ຖ້າຫາກມີຄວາມຕ້ອງການ Form A ແມ່ນເພື່ອໃຫ້ລະບຸຂໍ້ມູນລາຍລະອຽດ ກ່ຽວກັບ ການຜະລິດ ຫຼື ການປຸງແຕ່ງຢ່າງພຽງພໍຂອງສິນຄ້າເທົ່ານັ້ນ, ເຊິ່ງຄວາມຕ້ອງການດັ່ງ ກ່າວແມ່ນຂຶ້ນກັບພາສີຂອງເມືອງນັ້ນໆ.

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 5,514,628.38 ໂດລາສະຫະລັດ, ຮອງລົງມາແມ່ນ ແຜ່ນແພທີ່ເຮັດດ້ວຍເສັ້ນໄຍສັ້ນສັງເຄາະ (ລະຫັດພາສີ 5513) ມູນຄ່າ 4,323,650.00 ໂດລາສະຫະລັດ ແລະ ເສື້ອເຊີດທ໌ສໍາລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6206) ມູນຄ່າ 2,050,784.65 ໂດລາສະຫະລັດ.

ສໍາລັບປະເທດທີ່ມີມູນຄ່າການສົ່ງອອກຫຼາຍ 03 ອັນດັບຕົ້ນໃນປີ 2019 ໄດ້ແກ່: ຍີ່ປຸ່ນ, ຕວັກກີ ແລະ ສ ອາເມລິກາ; ຊຶ່ງມີມູນຄ່າ 13,915,437.51 ໂດລາສະຫະລັດ, 4,600,862.00 ໂດລາສະຫະລັດ ແລະ 663,709.50 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າແບບຝ່າຍດຽວ (GSP) ສໍາລັບຜະລິດຕະພັນທົ່ວໄປ ໃນປີ 2019 ກັບ 2018 ເຫັນວ່າ ມີການສົ່ງອອກທີ່ເພີ່ມຂຶ້ນແມ່ນມີພຽງ ປະເທດ ການາດາ ແລະ ຕວັກກີ ທີ່ມີເປີເຊັນເພີ່ມຂຶ້ນ ຄື: 122.01% ແລະ 1.72% ຕາມລໍາດັບ. ສ່ວນປະເທດທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ຍີ່ປຸ່ນ, ອິດສະຕາລີ ແລະ ສ ອາເມລິກາ; ໂດຍເປີເຊັນຫຼຸດລົງແມ່ນ -58.32%, -55.88% ແລະ -22.97% ຕາມລໍາດັບ. ນອກຈາກນັ້ນ, ໃນປີນີ້ຍັງໄດ້ມີການສົ່ງອອກໄປ ປະເທດຟິນແລນ ເພີ່ມຂຶ້ນອີກດ້ວຍ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 08, 09 ແລະ ເອກະສານຊ້ອນທ້າຍ 03)

**ຕາຕະລາງ 08:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະ ເຫຍື່ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 5,514,628.38 | 13,648,881.02 |
| 2 | 5513 | ແຜ່ນແພທີ່ເຮັດດ້ວຍເສັ້ນໄຍສັ້ນສັງເຄາະ, ທີ່ມີເສັ້ນໄຍດັ່ງກ່າວນ້ອຍກວ່າ 85% ໂດຍນໍ້າໜັກ, ປະສົມດ້ວຍຝ້າຍລ້ວນໆ ຫຼື ເປັນສ່ວນໃຫຍ່, ໜັກບໍ່ເກີນ 170 ກຣາມ/ມ2. | 4,323,650.00 | 4,441,570.00 |
| 3 | 6205 | ເສື້ອເຊີດທ໌ ສໍາລັບຜູ້ຊາຍ ຫຼື ເດັກຊາຍ. | 2,050,784.65 | 1,072,090.10 |
| 4 | 6206 | ເສື້ອບລາວສ໌ ສໍາລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌. | 1,124,855.19 | 1,416,437.71 |
| 5 | 3802 | ຄາຣ໌ບອນທີ່ມີລັກສະນະຕຸ້ນໃຫ້ມີພາວະກໍາມັນຕະພາບລັງສີ; ຜະລິດຕະພັນທີ່ໄດ້ຈາກແຮ່ທໍາມະຊາດລັກສະນະຊີວິດ, ສິ່ງດໍາຈາກສັດ, ລວມທັງສິ່ງດໍາຈາກສັດທີ່ໃຊ້ແລ້ວ. | 1,089,120.00 | 430,400.00 |
| 6 | 6105 | ເສື້ອເຊີດທ໌ສໍາລັບຜູ້ຊາຍ ຫຼື ເດັກຊາຍ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 1,013,915.15 | - |
| 7 | 6204 | ຊຸດສູດ ສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລ ເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 672,127.10 | 1,672,352.15 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 8 | 4202 | ຫີບເດີນທາງຂະໜາດໃຫຍ່, ຫີບໃສ່ເສື້ອຜ້າ ແລະ ຫີບນ້ອຍໃສ່ເຄື່ອງອື່ນໆ, ກະເປົານັກບໍລິຫານ, ກະເປົາເອກະສານ, ກະເປົາໜັກຮຽນ, ກັບໃສ່ແວ່ນຕາ,ກັບໃສ່ກ້ອງສ່ອງທາງໄກ, ກັບໃສ່ກ້ອງຖ່າຍຮູບ, ຖົງໃສ່ກ້ອງຖ່າຍວີດີໂອ, ຫີບໃສ່ເຄື່ອງດົນຕີ ຫຼື ຫີບໃສ່ອາວຸດ, ຊິບໃສ່ອາວຸດ ແລະ ພາສະນະທີ່ຄ້າຍຄຽງ. | 648,220.77 | 45,774.33 |
| 9 | 6104 | ຊຸດສູດສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງລວມ ຊຸມ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດເສື້ອກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນໍ້າ), ທີ່ຖັກແບບນິດ ຫຼື ແບບໂຄຣ ເຊັດທ໌. | 477,469.02 | 784,310.00 |
| 10 | 6106 | ເສື້ອບລາວສ໌ ສໍາລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌, ທີ່ຖັກ ແບບນິດ ຫຼື ແບບໂຄຣເຊັດທ໌. | 427,928.62 | - |
| 11 | | ອື່ນໆ | 2,068,365.93 | 15,415,555.71 |
| | | <u>ລວມ</u> | <u>19,411,064.81</u> | <u>38,927,371.02</u> |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 09:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ຍີ່ປຸ່ນ | 13,915,437.51 | 33,383,004.59 |
| 2 | ຕວັກກີ | 4,600,862.00 | 4,523,090.00 |
| 3 | ສ ອາເມລິກາ | 663,709.50 | 861,609.00 |
| 4 | ການາດາ | 198,271.80 | 89,307.03 |
| 5 | ອິດສະຕາລີ | 31,044.00 | 70,360.40 |
| 6 | ຟິນແລນ | 1,740.00 | - |
| <u>ລວມ</u> | | <u>19,411,064.81</u> | <u>38,927,371.02</u> |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.4 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (Form D)

ໃນປີ 2019 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆຂອງ ສປປ ລາວ ໄປຍັງ 09 ປະເທດສະມາຊິກອາຊຽນ ໂດຍນໍາໃຊ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (Form D) ມີມູນຄ່າສົ່ງອອກສູງເຖິງ 505,936,624.64 ໂດລາສະຫະລັດ, ເມື່ອສົມທຽບໃສ່ມູນຄ່າການສົ່ງອອກຂອງປີ 2018 ຈໍານວນ 552,517,342.37 ໂດລາສະຫະລັດ ເຫັນວ່າ ຫຼຸດລົງເລັກໜ້ອຍພຽງ -9.21%. ເມື່ອສົມທຽບມູນຄ່າການສົ່ງອອກໃສ່ບັນດາ Form ຊະນິດຕ່າງໆແລ້ວເຫັນວ່າ Form D ເປັນ Form ທີ່ມີການນໍາໃຊ້ຫຼາຍທີ່ສຸດໃນປີ 2019. ສາເຫດທີ່ພາໃຫ້ມູນຄ່າການສົ່ງອອກພາຍໃຕ້ສັນຍານີ້ຫຼຸດລົງອາດເປັນຍ້ອນບາງບໍລິສັດທີ່ມີປະສົບການ ແລະ ມີຄວາມເຂົ້າໃຈໃນການການອອກ Form D ຫຼາຍປີແລ້ວ ຫັນມານໍາໃຊ້ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ.

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 78,558,612.00 ໂດລາ

ສະຫະລັດ, ຮອງລົງມາແມ່ນ ຊີເມັນ ພອດແລນ(ລະຫັດພາສີ 2523) ມູນຄ່າ 69,615,959.00 ໂດລາສະຫະລັດ ແລະ ຢາງທຳມະຊາດ (ລະຫັດພາສີ 4401) ມູນຄ່າ 65,996,169.58 ໂດລາສະຫະລັດ. ນອກຈາກນັ້ນ, ຍັງສັງເກດເຫັນວ່າ ສິນຄ້າທີ່ສົ່ງອອກ 10 ອັນດັບຕົ້ນໃນຂອງປີນີ້ແມ່ນມີທ່າອຽງຫຼຸດລົງເມື່ອທຽບໃສ່ປີທີ່ຜ່ານມາ ເຊັ່ນ: ທອງ, ຜັກກະລໍ່າປີ, ເສັ້ນລອດ ແລະ ເຄເບີ້ນ, ກາເຟ ແລະ ພະລັງງານໄຟຟ້າ; ໂດຍເປີເຊັນການຫຼຸດລົງ ແມ່ນ: -54.17%, -40.61%, -23.72%, -16.03% ແລະ -2.77% ຕາມລຳດັບ.

ສຳລັບປະເທດທີ່ ສປປ ລາວ ມີການສົ່ງອອກຫຼາຍກວ່າໝູ່ 03 ອັນດັບຕົ້ນ ໄດ້ແກ່: ປະເທດໄທ ມູນຄ່າ 310,555,492.50 ໂດລາສະຫະລັດ, ຮອງລົງມາແມ່ນ ຫວຽດນາມ ມູນຄ່າ 178,594,792.28 ໂດລາສະຫະລັດ ແລະ ຟີລິບປິນ ມູນຄ່າ 6,434,627.00ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກອາຊຽນ ໃນປີ 2019 ກັບ 2018 ເຫັນວ່າ ປະເທດທີ່ມີການສົ່ງອອກເພີ່ມຂຶ້ນຫຼາຍແມ່ນ ອິນໂດເນເຊຍ, ກຳປູເຈຍ ແລະ ຫວຽດນາມ. ໂດຍອັດຕາເພີ່ມຂຶ້ນແມ່ນ 209.18%, 27.27% ແລະ 7.32% ຕາມລຳດັບ. ສ່ວນປະເທດທີ່ມີອັດຕາການສົ່ງອອກຫຼຸດລົງແມ່ນ ມາເລເຊຍ, ສິງກະໂປ, ຟີລິບປິນ ແລະ ໄທ; ຊຶ່ງເປີເຊັນການຫຼຸດລົງແມ່ນ -73.14%, -27.85, -27.80% ແລະ 14.88-% ຕາມລາດັບ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 10, 11 ແລະ ເອກະສານຊ້ອນທ້າຍທີ 04)

**ຕາຕະລາງ 10:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (Form D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຣາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອິນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 78,558,612.00 | 79,115,876.00 |
| 2 | 2523 | ຊີເມັນ ພອດແລນ, ຊີເມັນ ອະລູມີນັສ, ຊີເມັນ ສະແລັກ, ຊີເມັນ ຊູເປີຣ໌ຊັລເຟດທ໌ ແລະ ຊີເມັນ ໄຮດຣໍລິກ ທີ່ຄ້າຍຄືກັນ, ຈະແຕ່ງສີ ຫຼື ເປັນຊີເມັນເມັດ (ຄລິງເກີຣ໌) ຫຼື ບໍ່ກໍ່ຕາມ. | 69,615,959.00 | 57,450,727.28 |
| 3 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊີເຄີລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 65,996,169.58 | 59,175,991.14 |
| 4 | 2716 | ພະລັງງານໄຟຟ້າ. | 64,315,264.73 | 66,144,866.30 |
| 5 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 32,577,122.76 | 71,089,508.99 |
| 6 | 0704 | ກະລໍ່າປີ, ດອກກະລໍ່າປີ, ກະລໍ່າກູດ, ຜັກຈຳພວກຜັກກາດຂາວ ແລະພືດຜັກທີ່ຄ້າຍຄືກັນໃນຕະກູນບຣາສສິກາ, ສົດ ຫຼື ແຊ່ເຢັນທີ່ສາມາດບໍລິໂພກໄດ້. | 18,133,649.00 | 30,531,400.00 |
| 7 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະ ເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 16,364,328.61 | 19,489,121.69 |
| 8 | 1108 | ແປ້ງສະຕາດຈ໌; ແປ້ງອິນູລິນ. | 16,116,772.00 | 8,413,454.20 |
| 9 | 0803 | ໝາກກ້ວຍ, ລວມທັງໝາກໄມ້ຕະກູນກ້ວຍ, ສົດ ຫຼື ແຫ້ງ. | 13,267,641.10 | 8,155,179.80 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 10 | 8544 | ເສັ້ນລວດ ແລະ ເຄເບີລ (ລວມທັງເຄເບີລອ່ອມແກ່ນ) ທີ່ຫຸ້ມດ້ວຍວັດຖຸຕ້ານກັບການຮົ່ວຂອງກະແສສໍາລັບໄຟຟ້າ (ລວມເຖິງຊະນິດທີ່ເຄືອບດ້ວຍນໍ້າກ້ຽງໃສ່ອີກຊີ ຫຼື ບໍ່ກໍ່ຕາມ) ຈະຕິດກັບຂົ້ວຕໍ່ ຫຼື ບໍ່ກໍ່ຕາມ; ປະກອບດ້ວຍໃຍທີ່ຫຸ້ມປອກແຕ່ລະເສັ້ນຈະມີວັດຖຸຕືອນໍາໄຟຟ້າ ຫຼື ຕິດກັບຂົ້ວຕໍ່ ຫຼື ບໍ່ກໍ່ຕາມ. | 13,191,241.60 | 17,292,217.60 |
| 11 | ອື່ນໆ | | 117,799,864.26 | 135,658,999.37 |
| **ລວມ** | | | **505,936,624.64** | **552,517,342.37** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 11:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (Form D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ໄທ | 310,555,492.50 | 364,846,984.13 |
| 2 | ຫວຽດນາມ | 178,594,792.28 | 166,416,171.26 |
| 3 | ຟີລິບປິນ | 6,434,627.00 | 8,912,778.41 |
| 4 | ກໍາປູເຈຍ | 5,200,731.50 | 4,086,415.94 |
| 5 | ອິນໂດເນເຊຍ | 2,930,735.48 | 947,900.45 |
| 6 | ມາເລເຊຍ | 1,920,103.38 | 7,149,644.42 |
| 7 | ພະມ້າ | 186,546.00 | - |
| 8 | ສິງກະໂປ | 113,596.50 | 157,447.76 |
| **ລວມ** | | **505,936,624.64** | **552,517,342.37** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.5 ສັນຍາພາຍໃຕ້ເຂດການຄ້າເສລີເສລີອາຊຽນ - ຈີນ (Form E)

ໃນປີ 2019 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆ ໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ຈີນ ໂດຍການນໍາໃຊ້ສັນຍາພາຍໃຕ້ເຂດການຄ້າເສລີ ອາຊຽນ - ຈີນ (Form E) ມີມູນຄ່າສົ່ງອອກສູງເຖິງ 322,747,702.82 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ເຫັນວ່າ ເພີ່ມຂຶ້ນສູງເຖິງ 36.71% ແລະ ມູນຄ່າສົ່ງອອກຂອງ Form ນີ້ແມ່ນສູງເປັນອັນດັບທີ 02 ຮອງຈາກ Form D. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້ (ລະຫັດພາສີ 4702) ມູນຄ່າ 118,892,610.00 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທໍາມະຊາດ (ລະຫັດພາສີ 4001) ມູນຄ່າ 55,903,597.18 ໂດລາສະຫະລັດ ແລະ ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ (ລະຫັດພາສີ 3104) ມູນຄ່າ 53,385,691.89 ໂດລາສະຫະລັດ. ເມື່ອສົມທຽບລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10 ກັບປີທີ່ຜ່ານມາເຫັນວ່າ ສິນຄ້າສ່ວນຫຼາຍມີແນວໂນ້ມເພີ່ມຂຶ້ນ ແລະ ມີພຽງສິນຄ້າຈໍານວນໜ້ອຍທີ່ຫຼຸດລົງ ເຊັ່ນ: ຄລໍໄຣດ໌ (ລະຫັດພາສີ

2827) ຫຼຸດລົງ -13.36% ແລະ ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ -10.37%. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ປະເທດຈີນ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 12 ແລະ ເອກະສານຊ້ອນທ້າຍທີ 05)

**ຕາຕະລາງ 12:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ຈີນ (Form E)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 4702 | ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້. | 118,892,610.00 | 44,763,300.00 |
| 2 | 4001 | ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄີລ ແລະ ຢາງກໍາທໍາມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 55,903,597.18 | 33,276,383.40 |
| 3 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 53,385,691.89 | 59,562,241.23 |
| 4 | 3901 | ໂພລີເມີຣ໌ຂອງເອທີລີນ, ໃນຮູບແບບລັກສະນະຂັ້ນຕົ້ນ. | 32,467,661.60 | 12,808,161.28 |
| 5 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 14,148,635.27 | 2,185,991.40 |
| 6 | 1108 | ແປ້ງສະຕາດຈ໌; ແປ້ງອີນູລີນ. | 9,887,443.00 | 1,462,580.00 |
| 7 | 2827 | ຄລໍໄຣດ໌, ຄລໍໄຣດ໌ ອອກໄຊດ໌ ແລະຄລໍໄຣດ໌ໄຮດຣອກໄຊດ໌; ໂບຣໄມດ໌ ແລະໂບຣໄມດ ອອກໄຊດ໌; ໄອໂອໄດດ໌ ແລະ ໄອໂອໄດດ໌ ອອກໄຊດ໌. | 8,612,995.60 | 9,941,601.00 |
| 8 | 7801 | ຊືນທີ່ຍັງບໍ່ທັນຂຶ້ນຮູບຮ່າງ (ຫຍາບ). | 5,044,997.00 | - |
| 9 | 2609 | ແຮ່ຊືນ ແລະ ຫົວແຮ່ດັ່ງກ່າວ. | 3,456,434.50 | 523,416.00 |
| 10 | 2601 | ແຮ່ເຫຼັກ ແລະ ສິ່ງທີ່ກ່ຽວຂ້ອງຂອງແຮ່ເຫຼັກ, ລວມທັງແຮ່ເຫຼັກໄພໄຣທ໌ ທີ່ອົບແລ້ວ. | 3,193,300.00 | 470,000.00 |
| 11 | ອື່ນໆ | | 17,754,336.78 | 71,082,631.59 |
| **ລວມ** | | | **322,747,702.82** | **236,076,305.90** |

**ແຫຼ່ງຂໍ້ມູນ:** ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກໍາເນີດສິນຄ້ານໍາໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນໍາເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S)

ໃນປີ 2019 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປ ສສ ຫວຽດນາມ ໂດຍນໍາໃຊ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກໍາເນີດສິນຄ້ານໍາໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນໍາເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (Form S) ມີມູນຄ່າສົ່ງອອກ 134,186,615.08 ໂດລາສະຫະລັດ, ເມື່ອທຽບໃສ່ມູນຄ່າການສົ່ງອອກໃນປີ 2018 ເຫັນວ່າ ຫຼຸດລົງ -16.77%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຢາງທໍາມະຊາດ (ລະຫັດພາສີ 4001) ມູນຄ່າ 41,513,367.39 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທໍາມະຊາດ (ລະຫັດພາສີ 0901) ມູນຄ່າ 36,466,860.00 ໂດລາສະຫະລັດ ແລະ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 17,015,346.00 ໂດລາສະຫະລັດ. ເມື່ອສົມທຽບລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບ

ທີ 01 ເຖິງ 10 ຂອງປີ 2019 ກັບ ປີ 2018 ທີ່ຜ່ານມາ ເຫັນວ່າ ມີຫຼາຍລາຍການທີ່ມີມູນຄ່າການສົ່ງອອກຫຼຸດລົງ, ສ່ວນລາຍການສົ່ງອອກທີ່ມີມູນຄ່າເພີ່ມຂຶ້ນມີພຽງ 02 ລາຍການຄື: ໄມ້ ແລະ ຢາງທຳມະຊາດ; ຊຶ່ງເພີ່ມຂຶ້ນ 22.94 ເທົ່າ ແລະ 0.57 ເທົ່າ. ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສສ ຫວຽດນາມ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 13 ແລະ ເອກະສານຊ້ອນທ້າຍທີ 06)

**ຕາຕະລາງ 13:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (ຟອມ S)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 41,513,367.39 | 26,355,683.36 |
| 2 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອິນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະ ເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 36,466,860.00 | 49,793,048.98 |
| 3 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອິນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນສາຄູ. | 17,015,346.00 | 21,035,894.13 |
| 4 | 1701 | ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 12,015,992.00 | 12,584,208.50 |
| 5 | 2520 | ຫີນກາວຢິບຊຳ; ແອນໄຮໄດຣທ໌; ພລາສເຕີຣ໌ (ຊຶ່ງປະກອບດ້ວຍຫີນກາວຢິບຊ້ຳທີ່ຜ່ານການເຜົາໃໝ້ ຫຼື ແຄລຊຽມຊັລເຟດທ໌) ຈະແຕ່ງສີ ຫຼື ຕື່ມຕົວເລັ່ງ ຫຼື ຕົວກົດໜ່ວງໃນປະລິມານນ້ອຍ ຫຼື ບໍ່ກໍ່ຕາມ. | 8,910,699.20 | 10,510,250.00 |
| 6 | 1006 | ເຂົ້າ. | 3,335,500.00 | 6,558,450.00 |
| 7 | 1108 | ແປ້ງສະຕາດຈ໌; ແປ້ງອິນູລິນ. | 2,769,630.00 | 3,164,584.00 |
| 8 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສຳລັບປູພື້ນແບບປາກເກທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບປາຍ ຫຼື ໜ້າໄມ້ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ຮູບຕົວວີ, ຄິ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຂົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | 2,057,140.19 | 85,893.50 |
| 9 | 0813 | ໝາກໄມ້ແຫ້ງ, ນອກຈາກໝາກໄມ້ຊະນິດທີ່ບົ່ງໄວ້ແຕ່ລະຫັດເຄົ້າ 08.01 ຫາ 08.06; ລວມທັງຖົ່ວເປືອກແຂງ ແລະ ໝາກໄມ້ແຫ້ງຢູ່ໃນໝວດນີ້ປະສົມກັນ. | 2,032,488.44 | 3,120,760.00 |
| 10 | 9403 | ເຄື່ອງເຟີນີເຈີອື່ນໆ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. | 1,962,889.10 | 5,155,448.25 |
| 11 | ອື່ນໆ | | 6,106,702.76 | 22,862,962.49 |
| **ລວມ** | | | **134,186,615.08** | **161,227,183.21** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.7 ສິດທິພິເສດການຄ້າແບບຝ່າຍດຽວຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Form SPT)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປ ຈີນ ໂດຍນໍາໃຊ້ ສິດທິພິເສດການຄ້າແບບຝ່າຍດຽວຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Form SPT) ມີມູນຄ່າສົ່ງອອກ 25,000 ໂດລາສະຫະລັດ ເມື່ອທຽບໃສ່ ປີ 2018 ມູນຄ່າການສົ່ງອອກສູງເຖິງ 14,875,840.00 ໂດລາສະຫະລັດ ເຫັນວ່າ ຫຼຸດລົງຫຼາຍ -99.83%. ເນື່ອງຈາກວ່າ ໃນປີ 2019 ບໍ່ມີການສົ່ງອອກ ຢາງທໍາມະຊາດ (ລະຫັດພາສີ 4001) ເມື່ອທຽບກັບປີທີ່ຜ່ານມາ ການສົ່ງອອກສິນຄ້າປະເພດນີ້ມີມູນຄ່າສູງເຖິງ 14,831,919.00 ໂດລາສະຫະລັດ. ອີກໜຶ່ງສາເຫດທີ່ພາໃຫ້ການນໍາໃຊ້ Form SPT ຫຼຸດລົງຫຼາຍອາດເປັນເພາະໃນຂອບສັນຍານີ້ແມ່ນ ຈີນ ຈະໃຫ້ສິດທິພິເສດແບບຝ່າຍດຽວ ແລະ ລາຍການສິນຄ້າທີ່ໃຫ້ສິດທິພິເສດກໍ່ມີຈໍານວນທີ່ຈໍາກັດ, ຊຶ່ງສິນຄ້າທີ່ເປັນທ່າແຮງຂອງ ສປປ ລາວ ບາງລາຍການກໍ່ບໍ່ໄດ້ນອນໃນບັນຊີທີ່ໄດ້ຮັບສິດທິພິເສດຂອງສັນຍານີ້. ນອກຈາກນັ້ນ, ຜູ້ສົ່ງອອກຍັງມີຫຼາຍທາງເລືອກໃນການນໍາໃຊ້ສິດທິພິເສດຈາກຈີນ ໂດຍສາມາດເລືອກນໍາໃຊ້ໄດ້ທັງໝົດຈໍານວນ 03 Form ຄື: Form E, APTA ແລະ STP. ຈະສັງເກດເຫັນວ່າ ຜູ້ສົ່ງອອກສ່ວນໃຫຍ່ໄດ້ຫັນໄປນໍາໃຊ້ Form E ຍ້ອນວ່າ ໃນລະບຽບແຫຼ່ງກໍາເນີດສິນຄ້າຂອງຂອບສັນຍານີ້ເກືອບ 90% ຂອງລາຍການສິນຄ້າທັງໝົດແມ່ນໄດ້ນໍາເອົາມາເປີດຄ້າຂາຍ ແລະ ເອົາມາຫຼຸດຜ່ອນອັດຕາພາສີຂາເຂົ້າໃນຂອບສັນຍານີ້ ຈຶ່ງເຮັດໃຫ້ຕົວເລກການສົ່ງອອກຂອງ Form E ນັບມື້ນັບເພີ່ມຂຶ້ນ. ສິນຄ້າສົ່ງອອກໂດຍນໍາໃຊ້ Form SPT ມີພຽງ ໝາກກ້ວຍ (ລະຫັດພາສີ 0803) ມີມູນຄ່າການສົ່ງອອກ 25,000.00 ໂດລາສະຫະລັດ. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສິດທິພິເສດນີ້ມີພຽງ ປະເທດຈີນ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 14 ແລະ ເອກະສານຊ້ອນທ້າຍທີ 07)

**ຕາຕະລາງ 14:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດການຄ້າແບບຝ່າຍດຽວຈາກຈີນພາຍໃຕ້ລະບົບອັດຕາພາສີພິເສດ (Form SPT)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 0803 | ໝາກກ້ວຍ, ລວມທັງໝາກໄມ້ຕະກູນກ້ວຍ, ສົດ ຫຼື ແຫ້ງ. | 25,000.00 | 43,921.00 |
| 2 | 4001 | ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີຮ໌ຊາ, ກວາຍູ, ຊິເຄີລ ແລະ ຢາງກໍາທໍາມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | - | 14,831,919.00 |
| **ລວມ** | | | **25,000.00** | **14,875,840.00** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.8 ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອິນເດຍ ໂດຍນໍາໃຊ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI) ມີມູນຄ່າ 11,762,164.03 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ເຫັນວ່າ ຫຼຸດລົງຫຼາຍພໍສົມຄວນ -28.13%. ສາເຫດທີ່ພາໃຫ້ການນໍາໃຊ້ Form AI ຫຼຸດລົງອັນເນື່ອງມາຈາກ ສິດທິພິເສດທີ່ ສປປ ລາວ ແລະ ອິນເດຍເປັນພາຄີຮ່ວມກັນແມ່ນມີ 03 Form ຄື: Form AI, DFTP ແລະ APTA. ຊຶ່ງຜູ້ສົ່ງສາມາດເລືອກໃຊ້ Form ໃດກໍ່ໄດ້ທີ່ຕົນມີຄວາມລື້ງເຄີຍ ຫຼື ມີເງື່ອນແຫຼ່ງກໍາເນີດສິນຄ້າທີ່ງ່າຍດາຍກວ່າ ແລະ ອື່ນໆ. ລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນ

ດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 10,965,861.43 ໂດລາສະຫະລັດ, ຮອງລົງມາແມ່ນ ແຜ່ນສຳລັບເຮັດໄມ້ເວີເນຍ (ລະຫັດພາສີ 4408) ມູນຄ່າ 285,298.41 ໂດລາສະຫະລັດ ແລະ ກາເຟ (ລະຫັດພາສີ 0901) ມູນຄ່າ 186,300.00 ໂດລາສະຫະລັດ. ໃນປີ 2019 ສັງເກດເຫັນວ່າ ຈຳນວນສິນຄ້າສົ່ງອອກທີ່ເກີດຂຶ້ນໃໝ່ປະກອບມີ: ກາເຟ (ລະຫັດພາສີ 0901), ເສັ້ນໃຍນຳແສງ ແລະ ກຸ່ມເສັ້ນໃຍນຳແສງຊະນິດເຄເບີລ (ລະຫັດພາສີ 9001), ໄມ້ (ລະຫັດພາສີ 4409), ໄມ້ທີ່ເລື່ອຍ ຫຼື ຖາກຕາມລວງຍາວ (ລະຫັດພາສີ 4407) ແລະ ເສື້ອຍືດຄໍມົນ (ລະຫັດພາສີ 6109). ສຳລັບສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນໃນປີ 2019 ມີພຽງ ແຜ່ນສຳລັບເຮັດໄມ້ເວີເນຍ (ລະຫັດພາສີ 4408) ເພີ່ມຂຶ້ນ 44.17%.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີນີ້ແມ່ນມີ 02 ປະເທດຄື: ໄທ ມູນຄ່າ 10,965,861.43 ໂດລາສະຫະລັດ ແລະ ອິນເດຍ ມູນຄ່າ 796,302.60 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2019 ກັບ ປີ 2018 ເຫັນວ່າມີການສົ່ງອອກທີ່ຫຼຸດລົງຄື: ປະເທດໄທ ຫຼຸດລົງ -5.80% ແລະ ອິນເດຍ -83.08%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 15, 16 ແລະ ເອກະສານຊ້ອນທ້າຍທີ 08)

**ຕາຕະລາງ 15:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 10,965,861.43 | 11,636,845.44 |
| 2 | 4408 | ແຜ່ນສຳລັບເຮັດໄມ້ເວີເນຍ (ລວມທັງແຜ່ນໄມ້ທີ່ຝານເປັນແຜ່ນບາງໆ),ສຳລັບເຮັດໄມ້ອັດ ຫຼື ໄມ້ທີ່ຄ້າຍຄືກັນ ແລະໄມ້ອື່ນໆ, ເລື່ອຍຕາມທາງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼືເຂົ້າຫຼົ້ມແລ້ວ ຫຼືບໍ່ກໍ່ຕາມ, ມີຄວາມໜາບໍ່ເກີນ 6ມມ. | 285,298.41 | 197,894.38 |
| 3 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື່ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 186,300.00 | - |
| 4 | 9001 | ເສັ້ນໃຍນຳແສງ ແລະ ກຸ່ມເສັ້ນໃຍນຳແສງຊະນິດເຄເບີລ; ເຄເບີລໃຍນຳແສງ ນອກຈາກເຄເບີລໃຍນຳແສງທີ່ລະບຸໄວ້ໃນລະຫັດເຄົ້າ 85.44; ແຜ່ນບາງ ແລະ ແຜ່ນເຮັດດ້ວຍວັດຖຸໂພລາໄຣຊິງ; ເລນຊ໌ (ລວມທັງຄອນແທກແລນຊ໌), ປຣິຊຶມ, ແວ່ນແຍງ ແລະ ອຸປະກອນອື່ນໆ ທາງທັດສະນະສາດທີ່ເຮັດດ້ວຍວັດຖຸໃດກໍ່ຕາມ, ບໍ່ໄດ້ປະກອບ, ນອກຈາກອຸປະກອບທີ່ເຮັດດ້ວຍແກ້ວ ທີ່ຍັງບໍ່ທັນຕົບແຕ່ງ ເພື່ອໃຊ້ງານທາງທັດສະນະສາດ. | 106,590.00 | - |
| 5 | 4412 | ໄມ້ອັດ, ໄມ້ອັດວີເນຍ ແລະ ໄມ້ລາມີເນຕິດທີ່ຄ້າຍຄຽງ. | 92,786.44 | 3,629,655.40 |
| 6 | 4418 | ເຄື່ອງປະກອບອາຄານທີ່ເຮັດດ້ວຍໄມ້ ແລະ ເຄື່ອງໄມ້ທີ່ໃຊ້ໃນການກໍ່ສ້າງ, ລວມທັງແຜ່ນໄມ້ເຊລູລາ, ແຜ່ນໄມ້ປູພື້ນທີ່ປະກອບແລ້ວ, ກະເບື້ອງໄມ້ແບບຊິງເກິລ ແລະ ແບບເຊກ. | 77,275.99 | 86,471.47 |
| 7 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສຳລັບປູພື້ນແບບປາກເກທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼືໜ້າໄມ້ ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ | 19,555.72 | - |

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| | | ຮູບຕົວວີ, ຄົ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຊົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | | |
| 8 | 4407 | ໄມ້ທີ່ເລື່ອຍ ຫຼື ຖາກຕາມລວງຍາວ, ຝານ ຫຼື ລອກ, ຈະກົບ, ຂັດ ຫຼື ເຊົ້າຫຼົ້ມແລ້ວຫຼື ບໍ່ກໍ່ຕາມ, ມີຄວາມໜາເກີນ 6 ມິນລີແມັດ. | 15,611.40 | - |
| 9 | 1301 | ຂີ້ຄັ່ງ; ຢາງໄມ້ທຳມະຊາດ, ຢາງຂອງຕົ້ນສົນ, ຢາງໄມ້ປະສົມ ແລະ ຢາງສົນໂອລີ ໂອເຣຊິນ (ຕົວຢ່າງ, ຢາງຫອມທຳມະຊາດ). | 9,660.00 | 279,344.50 |
| 10 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 1,517.16 | - |
| 11 | ອື່ນໆ | | 1,707.48 | 535,217.88 |
| <u>ລວມ</u> | | | **<u>11,762,164.03</u>** | **<u>16,365,429.07</u>** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 16:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (Form AI)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ໄທ | 10,965,861.43 | 11,640,595.44 |
| 2 | ອິນເດຍ | 796,302.60 | 4,707,566.55 |
| 3 | ອື່ນໆ | - | 17,267.08 |
| **<u>ລວມ</u>** | | **<u>11,762,164.03</u>** | **<u>16,365,429.07</u>** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.9 ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສ ເກົາຫຼີ ໂດຍນຳໃຊ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK) ມີມູນຄ່າ 6,248,257.96 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ເຫັນວ່າ ຫຼຸດລົງເລັກໜ້ອຍພຽງ -4.63%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ໄຮໂດຣມິເຕີ ແລະ ອຸປະກອນທີ່ຄ້າຍຄຽງ (ລະຫັດພາສີ 9025) ມູນຄ່າ 4,221,667.96 ໂດລາສະຫະລັດ, ຮອງລົງມາແມ່ນ ຖ່ານໄມ້ (ລະຫັດພາສີ 4402) ມູນຄ່າ 607,380.31 ໂດລາສະຫະລັດ ແລະ ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ (ລະຫັດພາສີ 3104) ມູນຄ່າ 544,000.00 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2019 ກັບ 2018 ເຫັນວ່າ ສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນຫຼາຍແມ່ນ ໄມ້ (ລະຫັດພາສີ 4409) ເພີ່ມຂຶ້ນ 5.81 ເທົ່າ, ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ເພີ່ມຂຶ້ນ 1.73 ເທົ່າ ແລະ ໄຮໂດຣມິເຕີ ແລະ ອຸປະກອນທີ່ຄ້າຍຄຽງ (ລະຫັດພາສີ 9025) ເພີ່ມຂຶ້ນ 0.42 ເທົ່າ. ນອກຈາກນັ້ນ, ຍັງມີສິນຄ້າທີ່ມີການສົ່ງອອກໃໝ່ໃນປີ 2018 ມີຄື: ເສື້ອເຊີດທ໌ສຳລັບຜູ້ຊາຍ ຫຼື ເດັກຊາຍ (ລະຫັດພາສີ 6205), ໂພລີອະໄມດ໌ໃນຮູບແບບລັກສະນະຂັ້ນຕົ້ນ (ລະຫັດພາສີ 3908) ແລະ ເຄື່ອງໃຊ້ເທິງໂຕະອາຫານ (ລະຫັດພາສີ 4419).

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວນີ້ມີພຽງ 02 ປະເທດຄື: ໄທ ມູນຄ່າ 3,430,437.79 ໂດລາສະຫະລັດ ແລະ ສ ເກົາຫຼີ ມູນຄ່າ 2,817,820.17 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2019 ກັບ 2018 ເຫັນວ່າ ການສົ່ງອອກໄປປະເທດໄທ ແມ່ນເພີ່ມຂຶ້ນ 25.06%, ສ່ວນການສົ່ງອອກໄປ ສ ເກົາຫຼີ ຫຼຸດລົງເຖິງ -25.25%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 17, 18 ແລະ ເອກະສານຊ້ອນທ້າຍທີ 09)

**ຕາຕະລາງ 17:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 9025 | ໄຮໂດຣມິເຕີ ແລະ ອຸປະກອນທີ່ຄ້າຍຄຽງ, ເທີໂມມິເຕ, ໄພໂຣມິເຕີ, ບາໂຣມິເຕີ, ໄຮໂກຣມິເຕີ, ໄຊໂກຣມິມໍ່ເຕີ, ຈະບັນທຶກໄດ້ ຫຼື ບໍ່ກໍ່ຕາມ, ຈະປະກອບເຂົ້າກັນ ຫຼື ບໍ່ກໍ່ຕາມ. | 4,221,667.96 | 2,959,376.54 |
| 2 | 4402 | ຖ່ານໄມ້ (ລວມທັງຖ່ານທີ່ໄດ້ຈາກເປືອກແຂງ ຫຼື ນັດ), ຈະເກາະ ຫຼື ຕິດກັນເປັນກ້ອນ ຫຼື ບໍ່ກໍ່ຕາມ. | 607,380.31 | 831,824.94 |
| 3 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 544,000.00 | - |
| 4 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 266,042.82 | 97,140.00 |
| 5 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລອດລາຍສຳລັບປູພື້ນແບບປາກເກ ທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼືໜ້າໄມ້ ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ຮູບຕົວວີ, ຄິ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຂົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | 126,224.32 | 18,518.45 |
| 6 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 79,330.00 | 168,032.50 |
| 7 | 0813 | ໝາກໄມ້ແຫ້ງ, ນອກຈາກໝາກໄມ້ຊະນິດທີ່ບົ່ງໄວ້ແຕ່ລະຫັດເຖົ້າ 08.01 ຫາ 08.06; ລວມທັງຖົ່ວເປືອກແຂງ ແລະ ໝາກໄມ້ແຫ້ງຢູ່ໃນໝວດນີ້ປະສົມກັນ. | 51,200.00 | 79,306.00 |
| 8 | 5303 | ປໍຈຸດ ແລະ ໃຍຕໍ່າແຜ່ນທີ່ໄດ້ຈາກພືດອື່ນໆ (ນອກຈາກປ່ານລີນິນ, ປ່ານແທ້ ແລະ ປ່ານຣາມີ), ດິບ ຫຼື ຜ່ານກຳມະວິທີແລ້ວ ແຕ່ບໍ່ໄດ້ລັງ; ເສັ້ນໃຍທີ່ບໍ່ໄດ້ຂະໜາດ ແລະ ເສດຂອງໃຍເຫຼົ່ານີ້ (ລວມທັງເສດຂອງເສັ້ນ ແລະ ກຸ່ມໃຍທີ່ສາງໄດ້ຈາກໃຍດັ່ງກ່າວ). | 50,537.00 | 72,200.00 |
| 9 | 6107 | ໂສ້ງຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງນອນ, ຊຸດນຸ່ງ ນອນ, ເສື້ອຄຸມອາບນ້ຳ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 41,557.60 | 72,816.94 |
| 10 | 6214 | ຜ້າໜາສຳລັບຄຸມໄຫຼ່ (ແລະ ຫົວ), ຜ້າພັນຄໍ, ຜ້າປົກຫົວ, ຜ້າຄຸມໜ້າ ແລະ ສິ່ງຄ້າຍຄຽງ. | 41,265.00 | - |
| 11 | ອື່ນໆ | | 219,052.95 | 2,252,404.07 |
| **ລວມ** | | | **6,248,257.96** | **6,551,619.44** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 18:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ ເກົາຫຼີ (Form AK)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ໄທ | 3,430,437.79 | 2,742,938.84 |
| 2 | ສ ເກົາຫຼີ | 2,817,820.17 | 3,769,680.60 |
| 3 | ອື່ນໆ | - | 39,000.00 |
| ລວມ | | 6,248,257.96 | 6,551,619.44 |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.10 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຢີ່ປຸ່ນ (Form AJ)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ຢີ່ປຸ່ນ ໂດຍນຳໃຊ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ - ຢີ່ປຸ່ນ (Form AJ) ມີມູນຄ່າ 15,968,867.33 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ເຫັນວ່າ ຫຼຸດລົງຫຼາຍເຖິງ -73.34%. ສາເຫດທີ່ພາໃຫ້ການນຳໃຊ້ Form AJ ຫຼຸດລົງຫຼາຍແມ່ນຍ້ອນວ່າ ການສົ່ງອອກໄປຍັງປະເທດຢີ່ປຸ່ນ ຜູ້ສົ່ງອອກສາມາດເລືອກນຳໃຊ້ໄດ້ ລະຫວ່າງ Form AJ ຫຼື Form A, ຊຶ່ງວ່າບາງລາຍການສິນຄ້າທີ່ສົ່ງອອກຈາກ ສປປ ລາວ ກໍ່ບໍ່ສາມາດນຳໃຊ້ເງື່ອນໄຂແຫຼ່ງກຳເນີດສິນຄ້າຂອງ Form AJ ໄດ້ ເພາະວ່າການກຳນົດເງື່ອນໄຂແຫຼ່ງກຳເນີດສິນຄ້າໃນ Form AJ ຂ້ອນຂ້າງຍາກກວ່າທີ່ກຳນົດໄວ້ໃນ Form A (Japan GSP).

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ສິ່ງດັບກິ່ນໃນຫ້ອງຈະມີສານຫອມ (ລະຫັດພາສີ 3307) ມູນຄ່າ 6,885,811.36 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 3,137,202.76 ໂດລາສະຫະລັດ ແລະ ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລະຫັດພາສີ 1211) ມູນຄ່າ 1,812,486.80 ໂດລາສະຫະລັດ. ໃນນັ້ນ, ສິນຄ້າສົ່ງອອກສ່ວນໃຫຍ່ແມ່ນມີທ່າອ່ຽງຫຼຸດລົງຈຳນວນຫຼາຍ. ສຳລັບສິນຄ້າທີ່ມີມູນຄ່າສົ່ງອອກເພີ່ມຂຶ້ນໄດ້ແກ່ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403), ເສື້ອຍືດຄໍມົນ (ລະຫັດພາສີ 6109) ແລະ ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ(ລະຫັດພາສີ 6203); ເພີ່ມຂຶ້ນ 350 ເທົ່າ, 4.14 ເທົ່າ ແລະ 0.42 ເທົ່າ ຕາມລຳດັບ.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີ 2019 ນີ້ມີພຽງ 03 ປະເທດຄື: ຢີ່ປຸ່ນ, ໄທ ແລະ ສິງກະໂປ. ທີ່ມີມູນຄ່າການສົ່ງອອກ 15,499,200.29 ໂດລາສະຫະລັດ, 459,437.04 ໂດລາສະຫະລັດ ແລະ 10,230.00 ໂດລາສະຫະລັດ ຕາມລຳດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2019 ກັບ 2018 ເຫັນວ່າ ການສົ່ງອອກທີ່ມີການຫຼຸດລົງຫຼາຍທັງ 02 ປະເທດຄື: ໄທ -96.83% ແລະ ຢີ່ປຸ່ນ -65.86%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 19, 20 ແລະ ເອກະສານຊ້ອນທ້າຍທີ 10)

**ຕາຕະລາງ 19:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (**Form AJ**)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | **2019** | **2018** |
| 1 | 3307 | ສິ່ງປຸງແຕ່ງສໍາລັບກຽມແຖ, ການແຖ ຫຼື ຫຼັງການແຖ, ສິ່ງດັບກິ່ນຮ່າງກາຍ, ສິ່ງປຸງແຕ່ງສໍາລັບການອາບນໍ້າ, ສິ່ງຖອນຂົນ ແລະ ຜະລິດຕະພັນນໍ້າຫອມອື່ນໆ, ເຄື່ອງສໍາອາງປຸງແຕ່ງແລ້ວ ຫຼື ສິ່ງປຸງແຕ່ງດ້ານສຸຂະອະນາໄມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ; ສິ່ງດັບກິ່ນໃນຫ້ອງຈະມີສານຫອມ ຫຼື ຈະມີຄູນສົມບັດຂ້າເຊື້ອ ຫຼື ບໍ່ກໍ່ຕາມ. | 6,885,811.36 | 11,738,597.63 |
| 2 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 3,137,202.76 | 8,924.70 |
| 3 | 1211 | ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ຕົ້ນຕໍໃນການເຄື່ອງນໍ້າຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ, ແຊ່ແຂງ ຫຼື ແຫ້ງ,ຈະຕັດ ຫຼື ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ. | 1,812,486.80 | 2,387,031.20 |
| 4 | 6307 | ເຄື່ອງສໍາເລັດຮູບອື່ນໆ, ລວມທັງແມ່ແບບຕັດເຄື່ອງນຸ່ງຫົ່ມ. | 1,404,159.92 | 1,426,573.26 |
| 5 | 6115 | ໂສ້ງບາຣ໌, ໂສ້ງບາງຮັດຫຸ່ນ, ບາຣ໌, ຖົງຕີນ ແລະ ຖົງຕີນຖັກແສ່ວ ອື່ນໆ ລວມທັງຖົງຕີນຫຼູດຄວາມດັນ (ຕົວຢ່າງ: ບາຣ໌ຊ່ວຍປິ່ນປົວອາການເສັ້ນເລືອດຂອດ) ແລະ ເກີບທີ່ບໍ່ມີພື້ນເສີມ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 792,819.00 | 27,969,543.64 |
| 6 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 530,946.53 | 103,250.27 |
| 7 | 2203 | ເບຍທີ່ເຮັດຈາກເຂົ້າມອລທ໌. | 476,250.63 | 14,492,702.40 |
| 8 | 6203 | ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 329,680.33 | 230,599.93 |
| 9 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 219,684.08 | - |
| 10 | 6211 | ຊຸດວອມກິລາ, ຊຸດສໍາລັບຫຼິ້ນສະກີ ແລະ ຊຸດລອຍນໍ້າ; ເຄື່ອງນຸ່ງຫົ່ມອື່ນໆ. | 130,857.00 | 45,701.20 |
| 11 | ອື່ນໆ | | 248,968.92 | 1,486,671.81 |
| **ລວມ** | | | **15,968,867.33** | **59,889,596.04** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 20:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (Form AJ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | **2019** | **2018** |
| 1 | ຍີ່ປຸ່ນ | 15,499,200.29 | 45,396,893.64 |
| 2 | ໄທ | 459,437.04 | 14,492,702.40 |
| 3 | ສິງກະໂປ | 10,230.00 | - |
| **ລວມ** | | **15,968,867.33** | **59,889,596.04** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

### 2.3.11 ສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອົດສະຕາລີ-ນິວຊີແລນ ໂດຍນຳໃຊ້ສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ) ມີມູນຄ່າ 3,666,617.56 ໂດລາສະຫະລັດ, ເມື່ອທຽບໃສ່ປີ 2018 ເຫັນວ່າ ມູນຄ່າການນຳໃຊ້ແບບພິມນີ້ເພີ່ມຂຶ້ນສູງເຖິງ 2.69 ເທົ່າ. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ເຄື່ອງຈັກໄຟຟ້າ ແລະ ເຄື່ອງອຸປະກອນໄຟຟ້າ (ລະຫັດພາສີ 8543) ມູນຄ່າ 2,100,000.00 ໂດລາສະຫະລັດ, ຮອງລົງມາແມ່ນ ເຄື່ອງເອ້ຍ້ອງ ແລະ ຮູບປະພັນ (ລະຫັດພາສີ 7113) ມູນຄ່າ 766,372.67 ໂດລາສະຫະລັດ ແລະ ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ (ລະຫັດພາສີ 6403) ມູນຄ່າ 718,780.81 ໂດລາສະຫະລັດ. ເມື່ອທຽບໃສ່ລາຍການສິນຄ້າສົ່ງອອກໃນປີທີ່ຜ່ານມາເຫັນວ່າ ທຸກລາຍການສິນຄ້າສົ່ງອອກແມ່ນມີແນວໂນ້ມເພີ່ມຂຶ້ນ ແລະ ມີສິນຄ້າສົ່ງອອກໃໝ່ຫຼາຍລາຍການເປັນຕົ້ນແມ່ນ ເຄື່ອງຈັກໄຟຟ້າ ແລະ ເຄື່ອງອຸປະກອນໄຟຟ້າ (ລະຫັດພາສີ 8543), ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ (ລະຫັດພາສີ 6204), ເພັດ (ລະຫັດພາສີ 7102) ແລະ ເຄື່ອງຕັດຫຍິບອື່ນໆອີກຫຼາຍລາຍການ.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີນີ້ແມ່ນມີພຽງ 02 ປະເທດຄື: ອົດສະຕາລີ ມູນຄ່າ 3,639,677.30 ໂດລາສະຫະລັດ ແລະ ນິວຊີແລນ ມູນຄ່າ 26,940.26 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2019 ກັບ 2018 ເຫັນວ່າ ການສົ່ງອອກທີ່ເພີ່ມຫຼາຍຂຶ້ນແມ່ນ ອົດສະຕາລີ 3.5 ເທົ່າ, ສ່ວນ ນິວຊີແລນ ແມ່ນມີເປີເຊັນການສົ່ງອອກຫຼຸດລົງຫຼາຍເຖິງ -85.30%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 21, 22 ແລະ ເອກະສານຊ້ອນທ້າຍທີ 11)

**ຕາຕະລາງ 21:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 8543 | ເຄື່ອງຈັກໄຟຟ້າ ແລະ ເຄື່ອງອຸປະກອນໄຟຟ້າ, ທີ່ມີໜ້າທີ່ເຮັດວຽກສະເພາະຕົວ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ທີ່ອື່ນໃນໝວດນີ້. | 2,100,000.00 | - |
| 2 | 7113 | ເຄື່ອງເອ້ຍ້ອງ ແລະ ຮູບປະພັນ ແລະ ສ່ວນປະກອບຂອງເຄື່ອງດັ່ງກ່າວ, ທີ່ເຮັດດ້ວຍໂລຫະປະເສີດຫຼືເຮັດດ້ວຍໂລຫະທີ່ຫຸ້ມດ້ວຍໂລຫະປະເສີດ. | 766,372.67 | 626,067.96 |
| 3 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 718,780.81 | 359,660.40 |
| 4 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງ ທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 34,472.25 | - |
| 5 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 30,341.00 | 3,202.20 |
| 6 | 7102 | ເພັດ, ຈະຕົບແຕ່ງ ຫຼື ບໍ່ກໍ່ຕາມ, ແຕ່ບໍ່ທັນປະກອບເຂົ້າກັບເຄື່ອງປະດັບ. | 7,412.00 | - |
| 7 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 4,150.94 | - |
| 8 | 6103 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອ ເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມ ສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນໍ້າ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 1,919.00 | - |
| 9 | 6101 | ເສື້ອໂອເວີຣ໌ໂຄດສຳລັບຜູ້ຊາຍຫຼືເດັກຊາຍ, ຜ້າຄຸມລົດ, ເຄບ, ໂຄລກ, ເສື້ອກັນໜາວ ທີ່ມີໝວກຕິດຢູ່ນຳ, ເສື້ອກັນລົມ, ເສື້ອແຈັກເກັດກັນລົມ ແລະ ເຄື່ອງຄ້າຍຄຽງທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌, ນອກຈາກເຄື່ອງຂອງຕາມລະຫັດເຄົ້າ 61.03. | 1,775.64 | - |
| 10 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 1,393.25 | - |
| 11 | ອື່ນໆ | | - | 3,585.00 |
| **ລວມ** | | | **3,666,617.56** | **992,515.56** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

**ຕາຕະລາງ 22:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ສັນຍາສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (Form AANZ)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2019 | 2018 |
| 1 | ອົດສະຕາລີ | 3,639,677.30 | 809,291.76 |
| 2 | ນິວຊີແລນ | 26,940.26 | 183,223.80 |
| **ລວມ** | | **3,666,617.56** | **992,515.56** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

#### 2.3.12 ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ຢູ່ໃນສັນຍາການຄ້າອາຊີປາຊີຟິກໄດ້ແກ່: ອິນເດຍ, ຈີນ, ສ ເກົາຫຼີ, ສີລັງກາ ແລະ ບັງກະລາເດສ. ຊຶ່ງການນໍາໃຊ້ ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)ໃນປີນີ້ມີມູນຄ່າການສົ່ງອອກພຽງ 73,930.00 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ທີ່ຜ່ານມາເຫັນວ່າ ມີມູນຄ່າການສົ່ງອອກເພີ່ມຂຶ້ນພຽງເລັກໜ້ອຍ 19.54%. ໃນນັ້ນ, ສິນຄ້າທີ່ສົ່ງອອກມີພຽງລາຍການດຽວກໍ່ຄື ນໍ້າໝາກໄມ້ (ລະຫັດພາສີ 2009). ປະເທດທີ່ ສປປ ລາວ ສົ່ງອອກໂດຍນໍາໃຊ້ Form APTA ໃນປີ 2019 ມີພຽງ ສ ເກົາຫຼີ ເທົ່ານັ້ນ.

**ຕາຕະລາງ 23:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າ ອາຊີ-ປາຊີຟິກ (Form APTA)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 2009 | ນໍ້າໝາກໄມ້ (ລວມທັງ ເກຣບ ມັສທ໌) ແລະ ນໍ້າພືດຜັກ, ທີ່ບໍ່ທັນໝັກ ແລະ ບໍ່ທັນຕື່ມເຫຼົ້າ, ຈະມີສ່ວນປະສົມຂອງນໍ້າຕານ ຫຼື ສານຫວານອື່ນໆ ຫຼື ບໍ່ກໍ່ຕາມ. | 73,930.00 | 61,847.00 |
| **ລວມ** | | | **73,930.00** | **61,847.00** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

#### 2.3.13 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (Form CO-Korea)

ໃນປີ 2019 ການສົ່ງອອກສິນຄ້າປະເພດຕ່າງໆ ທີ່ ສ ເກົາຫຼີ ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປໂດຍການຍົກເວັ້ນພາສີ ແລະ ບໍ່ກໍານົດໂກຕ້າແກ່ສິນຄ້າສົ່ງອອກຈາກປະເທດດ້ອຍພັດທະນາ ລວມທັງ ສປປ ລາວ ໂດຍນໍາໃຊ້ Form CO-Korea. ມູນຄ່າການສົ່ງອອກໃນປີນີ້ແມ່ນ 1,698,532.31 ໂດລາສະຫະລັດ ເມື່ອທຽບໃສ່ປີ 2018 ເຫັນວ່າເພີ່ມຂຶ້ນຫຼາຍພໍສົມຄວນ 47.87%. ໃນນັ້ນລາຍການສິນຄ້າສົ່ງອອກມີພຽງ 09 ລາຍການເທົ່ານັ້ນ, ຊຶ່ງ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຖ່ານໄມ້ (ລະຫັດພາສີ 4402) ມູນຄ່າ 1,123,899.09 ໂດລາສະຫະລັດ, ຮອງລົງມາແມ່ນ ໝາກພ້າວ, ຖົ່ວເປືອກແຂງພັນບຣາຊິລ(ລະຫັດພາສີ 0801) ມູນຄ່າ 538,049.83 ໂດລາສະຫະລັດ ແລະ ໄມ້ທີ່ຝັງ ຫຼື ປະດັບດ້ວຍມຸກ (ລະຫັດພາສີ 4420) ມູນຄ່າ 20,212.78ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2019 ກັບ 2018 ເຫັນວ່າ ມູນຄ່າການສົ່ງອອກແຕ່ລະລາຍການສິນຄ້າໃນຂອບສັນຍານີ້ແມ່ນມີແນວໂນ້ມເພີ່ມຂຶ້ນ, ຍົກເວັ້ນ ກາເຟ (ລະຫັດພາສີ 0901) ທີ່ມີມູນຄ່າການສົ່ງອອກຫຼຸດລົງ 94.66% ແລະ ສະບູ (ລະຫັດພາສີ 3401) ຫຼຸດລົງ 56.49%. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສ ເກົາຫຼີ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 24 ແລະ ເອກະສານຊ້ອນທ້າຍທີ 12)

**ຕາຕະລາງ 24:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (Form CO-Korea)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2019 | 2018 |
| 1 | 4402 | ຖ່ານໄມ້ (ລວມທັງຖ່ານທີ່ໄດ້ຈາກເປືອກແຂງ ຫຼື ນັດ), ຈະເກາະ ຫຼື ຕິດກັນເປັນກ້ອນ ຫຼື ບໍ່ກໍ່ຕາມ. | 1,123,899.09 | 618,962.00 |
| 2 | 0801 | ໝາກພ້າວ, ຖົ່ວເປືອກແຂງພັນບຣາຊິລ, ແກ່ນໝາກມ່ວງຫິມະພານ, ສົດ ຫຼື ແຫ້ງ, ບໍ່ມີເປືອກ ຫຼື ແກະເອົາເປືອກອອກ ຫຼື ບໍ່ກໍ່ຕາມ. | 538,049.83 | 451,742.00 |
| 3 | 4420 | ໄມ້ທີ່ຝັງ ຫຼື ປະດັບດ້ວຍມຸກ, ກ່ອງ ແລະ ກັບສາລັບເຄື່ອງເພັດພອຍ, ເຄື່ອງເງິນ, ເຄື່ອງຄຳ ຫຼືຂອງມີຄົມ ແລະ ເຄື່ອງຂອງທີ່ຄ້າຍຄືກັນທີ່ເຮັດດ້ວຍໄມ້, ຮູບແກະສະລັກ ແລະ ເຄື່ອງຂອງປະດັບອື່ນໆສຳລັບເອ້ ທີ່ເຮັດດ້ວຍໄມ້, ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ ທີ່ບໍ່ໄດ້ຈັດເຂົ້າໃນໝວດ 94. | 20,212.78 | - |
| 4 | 9403 | ເຄື່ອງເຟີນີເຈີອື່ນໆ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. | 6,766.00 | - |
| 5 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລອດລາຍສຳລັບປູພື້ນແບບປາກເກ ທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼືໜ້າໄມ້ ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ຮູບຕົວວີ, ຄິ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຂົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | 3,972.60 | - |
| 6 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອິນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື່ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 2,500.00 | 46,854.00 |
| 7 | 3401 | ສະບູ; ຜະລິດຕະພັນ ແລະ ສິ່ງປຸງແຕ່ງອິນຊີທີ່ມີຄຸນສົມບັດລົດແຮງຕຶງຜິວທີ່ໃຊ້ເປັນສະບູ, ເປັນແທ່ງ, ເປັນຮູບກ້ອນມົນ, ເປັນກ້ອນ ຫຼື ເປັນຮູບອື່ນຈະມີສະບູ ຫຼື ບໍ່ກໍ່ຕາມ; ສິ່ງປຸງແຕ່ງທີ່ມີອິນຊີທີ່ມີຄຸນສົມບັດລົດແຮງຕຶງຜິວທີ່ໃຊ້ສຳລັບການສຳລະລ້າງຜິວເປັນນໍ້າ ຫຼື ເປັນຄຣີມຈັດທຳຂຶ້ນເພື່ອການຂາຍຍ່ອຍຈະມີສະບູ ຫຼື ບໍ່ກໍ່ຕາມ, ກະດາດຍອງ, ສັກກະຫຼາດ ແລະ ຜ້າບໍ່ໄດ້ຕໍ່າ, ອາບຊຶມ, ເຄືອບ, ຫຸ້ມດ້ວຍສະບູ ຫຼື ສານຊັກຟອກ. | 1,542.50 | 3,545.00 |
| 8 | 0602 | ຕົ້ນໄມ້ທີ່ມີຊີວິດອື່ນ (ລວມທັງຮາກ), ງ່າຕອນ ແລະ ແໜງຕອນ, ເຊື້ອເຫັດ. | 1,350.00 | - |
| 9 | 7113 | ເຄື່ອງເອ້ຍ້ອງ ແລະ ຮູບປະພັນ ແລະ ສ່ວນປະກອບຂອງເຄື່ອງດັ່ງກ່າວ, ທີ່ເຮັດດ້ວຍໂລຫະປະເສີດ ຫຼື ເຮັດດ້ວຍໂລຫະທີ່ຫຸ້ມດ້ວຍໂລຫະປະເສີດ. | 239.51 | - |
| 11 | | ອື່ນໆ | - | 27,598.40 |
| | | **ລວມ** | **1,698,532.31** | **1,148,701.40** |

**ແຫຼ່ງຂໍ້ມູນ**: ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ

## 3. ການນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

### 3.1 ປະເທດນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

ຕະຫຼອດໃນໄລຍະ 02 ປີ (2018-2019) ທີ່ຜ່ານມາ ມີການນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ ຈາກທັງໝົດ 43 ປະເທດ. ໃນນັ້ນ, ປະເທດທີ່ມີການນໍາເຂົ້າເປັນອັນດັບຕົ້ນໆຂອງທັງສອງປີແມ່ນປະເທດ ດຽວກັນຄື: ໄທ, ຈີນ ແລະ ຫວຽດນາມ. ໃນປີ 2019 ສປປ ລາວ ມີການນໍາເຂົ້າພາຍໃຕ້ສິດທິພິເສດທາງການ ຄ້າຈາກ 33 ປະເທດ, ຊຶ່ງມີມູນຄ່າການໍາເຂົ້າທັງໝົດ 665,920,272.34 ໂດລາສະຫະລັດ ເມື່ອທຽບໃສ່ມູນ ຄ່າປີຜ່ານມາແມ່ນເພີ່ມຂຶ້ນເລັກໜ້ອຍພຽງ 8.49%. ໃນນັ້ນ, ປະເທດທີ່ມີມູນຄ່າການນໍາເຂົ້າສູງກວ່າໝູ່ແມ່ນ ໄທ, ຈີນ ແລະ ຫວຽດນາມ; ມີມູນຄ່າການນໍາເຂົ້າສູງເຖິງ 380,875,977.90 ໂດລາສະຫະລັດ, 98,966,048.00 ໂດລາສະຫະລັດ ແລະ 86,656,003.35 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບ ໃສ່ການນໍາເຂົ້າກັບປີ 2018 ທີ່ຜ່ານມາເຫັນວ່າມີເປີເຊັນເພີ່ມຂຶ້ນຫຼາຍພໍສົມຄວນ ຄື: 15.75%, 24.35% ແລະ 13.43% ຕາມລໍາດັບ. ສ່ວນປະເທດທີ່ມີການເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ອູເກຣນ, ລັດເຊຍ ແລະ ຮົງກົງ, ຊຶ່ງມີມູນຄ່າການນໍາເຂົ້າ 30,209.00 ໂດລາສະຫະລັດ, 22,592.75 ໂດລາສະຫະລັດ ແລະ 12,170.96 ໂດລາສະຫະລັດ ຕາມລໍາດັບ. ພ້ອມດຽວກັນນີ້, ປີ 2019 ຍັງມີປະເທດທີ່ມີການນໍາເຂົ້າເພີ່ມຂຶ້ນ ເຊັ່ນ: ສະຫະນະຄອນອາເມຣິກ, ກໍາປູເຈຍ, ອູເກຣນ ແລະ ຮົງກົງ.

ໃນປີ 2018 ສປປ ລາວ ມີການນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າຈາກ 39 ປະເທດ, ຊຶ່ງມີມູນ ຄ່າການນໍາເຂົ້າທັງໝົດ 613,834,437.00 ໂດລາສະຫະລັດ. ໃນນັ້ນ, ປະເທດທີ່ນໍາເຂົ້າຫຼາຍກວ່າໝູ່ແມ່ນ ໄທ, ຈີນ ແລະ ຫວຽດນາມ; ມີມູນຄ່າການນໍາເຂົ້າສູງເຖິງ 329,044,041.00 ໂດລາສະຫະລັດ, 79,584,310.00 ໂດລາສະຫະລັດ ແລະ 76,395,413.00 ໂດລາສະຫະລັດ ຕາມລໍາດັບ. ສໍາລັບປະເທດ ທີ່ມີການນໍາເຂົ້າໜ້ອຍກວ່າໝູ່ໃນປີນີ້ແມ່ນ ກົວເຕມາລາ, ການາດາ ແລະ ສະວິດເຊີແລນ, ຊຶ່ງມີມູນຄ່າການນໍາ ເຂົ້າພຽງ 700 ໂດລາສະຫະລັດ, 256 ໂດລາສະຫະລັດ ແລະ 145 ໂດລາສະຫະລັດ ຕາມລໍາດັບ.

ເມື່ອທຽບມູນຄ່າການນໍາເຂົ້າການນໍາເຂົ້າສິນຄ້າຂອງແຕ່ລະປະເທດໃນປີ 2018 ຫາ 2019 ເຫັນວ່າ ປະເທດທີ່ມີປະລິມານການນໍາເຂົ້າເພີ່ມຂຶ້ນໄດ້ແກ່: ສິງກະໂປ, ໂຮນລັງ ແລະ ຮົງກາລີ; ປະລິມານການເພີ່ມຂຶ້ນ 168.03 ເທົ່າ, 6.55 ເທົ່າ ແລະ 4.76 ເທົ່າ ຕາມລໍາດັບ. ສ່ວນປະເທດທີ່ມີການນໍາເຂົ້າຫຼຸດລົງແມ່ນ ລັດເຊຍ, ຟີລິບປິນ ແລະ ອາຟຣິກກາໃຕ້; ໂດຍມີເປີເຊັນຫຼຸດລົງແມ່ນ -89.94%, -53.86% ແລະ -45.16% ຕາມ ລໍາດັບ.

ຂໍ້ມູນສິດທິພິເສດທາງການຄ້າເບື້ອງຂາເຂົ້າ (ການນໍາເຂົ້າ) ທີ່ນໍາເອົາມາທໍາການວິເຄາະໃນຄັ້ງນີ້ມີ 03 ຮູບແບບ ຄື: ຂໍ້ມູນສິທິພິເສດທາງການຄ້າແບບຝ່າຍດຽວ, ແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ສິດທິ ພິເສດທາງການຄ້າໃນຂອບອົງການການຄ້າໂລກ (WTO).

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 25)

**ຕາຕະລາງ 25:** ປະເທດທີ່ນໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ ປະຈໍາປີ 2018 ຫາ 2019

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍຊື່ປະເທດ | ມູນຄ່າການນໍາເຂົ້າ (2019) | ມູນຄ່າການນໍາເຂົ້າ (2018) | ສົມທຽບ (%) |
|---|---|---|---|---|
| 1 | ໄທ | 380,875,977.90 | 329,044,041.00 | 15.75 |
| 2 | ຈີນ | 98,966,048.00 | 79,584,310.00 | 24.35 |
| 3 | ຫວຽດນາມ | 86,656,003.35 | 76,395,413.00 | 13.43 |
| 4 | ຍີ່ປຸ່ນ | 39,432,524.12 | 60,869,719.00 | (35.22) |
| 5 | ອິນໂດເນເຊຍ | 16,322,379.01 | 29,335,925.00 | (44.36) |

| ລ/ດ | ລາຍຊື່ປະເທດ | ມູນຄ່າການນຳເຂົ້າ (2019) | ມູນຄ່າການນຳເຂົ້າ (2018) | ສົມທຽບ (%) |
|---|---|---|---|---|
| 6 | ອັງກິດ | 11,351,041.75 | 9,986,314.00 | 13.67 |
| 7 | ສ ອາເມລິກາ | 5,547,402.47 | 6,952,501.00 | (20.21) |
| 8 | ສະຫະນະຄອນ ອາເມຣັດ | 4,581,887.20 | - | - |
| 9 | ສ ເກົາຫຼີ | 3,529,009.68 | 5,385,454.00 | (34.47) |
| 10 | ອິນເດຍ | 3,411,417.93 | 3,519,590.00 | (3.07) |
| 11 | ເຢຍລະມັນ | 3,113,535.00 | 2,483,820.00 | 25.35 |
| 12 | ມາເລເຊຍ | 2,477,743.73 | 2,168,929.00 | 14.24 |
| 13 | ສິງກະໂປ | 2,026,769.79 | 11,990.00 | 16,803.83 |
| 14 | ໄຕ້ຫວັນ | 1,160,984.00 | 1,154,068.00 | 0.60 |
| 15 | ໂອຕຣິສ | 1,151,501.00 | 888,192.00 | 29.65 |
| 16 | ຝຣັ່ງ | 766,280.26 | 1,185,639.00 | (35.37) |
| 17 | ອິຕາລີ | 702,341.38 | 818,341.00 | (14.17) |
| 18 | ຟີລິບປິນ | 619,497.80 | 1,342,700.00 | (53.86) |
| 19 | ໂຮນລັງ | 609,085.98 | 80,641.00 | 655.31 |
| 20 | ແອັສປາຍ | 473,505.86 | 421,126.00 | 12.44 |
| 21 | ຊິລີ | 464,933.25 | 464,477.00 | 0.10 |
| 22 | ອົດສະຕາລີ | 436,909.00 | 419,412.00 | 4.17 |
| 23 | ອາກຊັງຕິນ | 331,714.27 | 134,020.00 | 147.51 |
| 24 | ຮົງກາລີ | 258,100.00 | 44,766.00 | 476.55 |
| 25 | ແມັກຊິໂກ | 204,843.00 | 127,426.00 | 60.75 |
| 26 | ອາຟຣິກາໃຕ້ | 188,121.49 | 343,050.00 | (45.16) |
| 27 | ແບນຊິກ | 68,637.00 | 105,618.00 | (35.01) |
| 28 | ນິວຊີແລນ | 62,902.97 | 96,584.00 | (34.87) |
| 29 | ປໍ່ອກຕຸຍການ | 33,962.44 | 59,976.00 | (43.37) |
| 30 | ກຳປູເຈຍ | 30,240.00 | - | - |
| 31 | ອູເກຣນ | 30,209.00 | - | - |
| 32 | ລັດເຊຍ | 22,592.75 | 224,611.00 | (89.94) |
| 33 | ຮົງກົງ | 12,170.96 | - | - |
| 34 | ຕວັກກີ | - | 109,575.00 | (100.00) |
| 35 | ເຊັກ | - | 26,880.00 | (100.00) |
| 36 | ປູເອໂຕ ຣິໂກ | - | 20,090.00 | (100.00) |
| 37 | ອຽກລັງ | - | 12,368.00 | (100.00) |
| 38 | ສະວິເດນ | - | 8,203.00 | (100.00) |

| ລ/ດ | ລາຍຊື່ປະເທດ | ມູນຄ່າການນໍາເຂົ້າ (2019) | ມູນຄ່າການນໍາເຂົ້າ (2018) | ສົມທຽບ (%) |
|---|---|---|---|---|
| 39 | ກູບາ | - | 3,640.00 | (100.00) |
| 40 | ໂປໂລຍ | - | 1,900.00 | (100.00) |
| 41 | ກົວເຕມາລາ | - | 700.00 | (100.00) |
| 42 | ການາດາ | - | 265.00 | (100.00) |
| 43 | ສະວິດເຊີແລນ | - | 145.00 | (100.00) |
| **ລວມ** | | **665,920,272.34** | **613,832,419.00** | **8.49** |

**ແຫຼ່ງຂໍ້ມູນ**: ກົມພາສີ, ກະຊວງການເງິນ

## 3.2 ລາຍການສິນຄ້ານໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2019 ການນໍາເຂົ້າສິນຄ້າຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າ ໄດ້ຈັດລາຍການສິນຄ້ານໍາເຂົ້າເປັນກຸ່ມສິນຄ້າ ທັງໝົດມີຈໍານວນ 13 ກຸ່ມ ຄື: ກຸ່ມສະບຽງອາຫານ, ກຸ່ມສິນຄ້າຟຸມເຟືອຍ, ກຸ່ມສິນຄ້າຮັບໃຊ້ອຸດສາຫະກໍາ, ກຸ່ມນໍ້າມັນເຊື້ອໄຟ ແລະ ອາຍແກັດ, ກຸ່ມຜະລິດຕະພັນ ແລະ ສິນຄ້າຮັບໃຊ້ກະສິກໍາ, ກຸ່ມພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມວັດຖຸດິບນໍາເຂົ້າສໍາລັບຕັດຫຍິບ, ກຸ່ມອຸປະກອນ ແລະ ການຢາໃຊ້ໃນການແພດ, ກຸ່ມອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ, ກຸ່ມອຸປະກອນເຄື່ອງກໍ່ສ້າງ, ກຸ່ມເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ສອຍປະຈໍາວັນ, ກຸ່ມເຄື່ອງອຸປະກອນເອເລັກໂຕຣນິກ ແລະ ສື່ສານ ແລະ ກຸ່ມເຄື່ອງໃຊ້ຫ້ອງການ.

ສິນຄ້ານໍາເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນໄລຍະ 02 ປີ (2018-2019) ທີ່ຜ່ານມາເຫັນວ່າມີລາຍການສິນຄ້ານໍາເຂົ້າທັງໝົດຈໍານວນ 621 ລາຍການ. ສໍາລັບປີ 2019 ມີການນໍາເຂົ້າສິນຄ້າຈໍານວນ 494 ລາຍການ, ຊຶ່ງມີມູນຄ່າການນໍາເຂົ້າ 665,920,272.34 ໂດລາສະຫະລັດ ເມື່ອສົມທຽບໃສ່ປີ 2018 ທີ່ຜ່ານມາເຫັນວ່າ ລາຍການສິນຄ້ານໍາເຂົ້າມີພຽງ 367 ລາຍການ, ເພີ່ມຂຶ້ນຫຼາຍເຖິງ 127 ລາຍການ ແລະ ມູນຄ່າການນໍາເຂົ້າ 613,832,419.00 ໂດລາສະຫະລັດ ເພີ່ມຂຶ້ນ 8.49%.

ສໍາລັບກຸ່ມສິນຄ້າທີ່ມີການນໍາເຂົ້າຫຼາຍກວ່າໝູ່ 03 ອັນດັບຕົ້ນແມ່ນ ກຸ່ມສິນຄ້າພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່, ກຸ່ມສິນຄ້າເຄື່ອງນຸ່ງຫົ່ມ ເຄື່ອງໃຊ້ສອຍປະຈໍາວັນ ແລະ ກຸ່ມອຸປະກອນເຄື່ອງກໍ່ສ້າງ. ມີມູນຄ່າການນໍາເຂົ້າ 364,542,586.24 ໂດລາສະຫະລັດ, 91,398,594.04 ໂດລາສະຫະລັດ ແລະ 75,652,294.29 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບກຸ່ມສິນຄ້ານໍາເຂົ້າໃນປີ 2019 ກັບ 2018 ເຫັນວ່າ 03 ກຸ່ມສິນຄ້ານໍາເຂົ້າຫຼັກແມ່ນກຸ່ມດຽວກັນ, ແຕ່ວ່າໃນປີ 2019 ກຸ່ມສິນຄ້າພາຫະນະ, ສິ້ນສ່ວນ ແລະ ອາໄຫຼ່ ມີມູນຄ່າການນໍາເຂົ້າຫຼຸດລົງເລັກໜ້ອຍ 1.25%. ໃນຂະນະດຽວກັນ ກຸ່ມສິນຄ້າເຄື່ອງນຸ່ງຫົ່ມ ເຄື່ອງໃຊ້ສອຍປະຈໍາວັນ ແລະ ກຸ່ມອຸປະກອນເຄື່ອງກໍ່ສ້າງ ມີການນໍາເຂົ້າເພີ່ມຂຶ້ນ 7.01% ແລະ 17.94% ຕາມລໍາດັບ.

ໃນການສົມທຽບກຸ່ມສິນຄ້ານໍາເຂົ້າທັງໝົດໃນປີ 2019 ກັບ 2018 ເຫັນວ່າ 03 ກຸ່ມສິນຄ້າທີ່ມີເປີເຊັນການນໍາເຂົ້າສູງກວ່າສຸດແມ່ນ: ກຸ່ມວັດຖຸດິບນໍາເຂົ້າສໍາລັບຕັດຫຍິບ ເພີ່ມຂຶ້ນ 65.17 ເທົ່າ, ຮອງລົງມາແມ່ນ ກຸ່ມຜະລິດຕະພັນ ແລະ ສິນຄ້າຮັບໃຊ້ກະສິກໍາ ເພີ່ມຂຶ້ນ 1.98 ເທົ່າ ແລະ ກຸ່ມນໍ້າມັນເຊື້ອໄຟ ແລະ ອາຍແກັດ ເພີ່ມຂຶ້ນ 1.52 ເທົ່າ.

(ລາຍລະອຽດສາມາດເບິ່ງຕາມ ເອກະສານຊ້ອນທ້າຍທີ 13)

# 4. ເອກະສານຊ້ອນທ້າຍ

**ເອກະສານຊ້ອນທ້າຍທີ 01**

**ຕາຕະລາງລາຍການສິນຄ້າທີ່ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2018-2019**

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| **I** | | **ສັດ** | | |
| 1 | 0102 | ສັດປະເພດງົວຄວາຍທີ່ມີຊີວິດ. | 1,710,412.00 | 508,460.00 |
| 2 | 0106 | ສັດທີ່ມີຊີວິດອື່ນໆ. | 1,400,500.00 | 260,218.40 |
| 3 | 0101 | ມ້າ, ລາ ແລະ ລໍ ທີ່ມີຊີວິດ. | 29,422.95 | - |
| 4 | 0103 | ໝູທີ່ມີຊີວິດ. | 26,670.00 | 26,355,683.36 |
| 5 | 0307 | ສັດນໍ້າຈຳພວກໂມລລັສສ໌, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ, ມີຊີວິດ, ສົດ, ແຊ່ເຢັນ, ແຊ່ແຂງ, ແຫ້ງ, ເອືອບເກືອ ຫຼືແຊ່ນໍ້າເກືອ; ສັດນໍ້າຈຳພວກໂມລລັສສ໌ທີ່ອົບຄວັນ, ບໍ່ທັນເອົາເປືອກ ຫຼື ບໍ່ກໍ່ຕາມ, ຈະເຮັດໃຫ້ສຸກກ່ອນ ຫຼື ໃນຂະນະອົບຄວັນ; ທີ່ເໝາະສຳລັບການບໍລິໂພກຂອງມະນຸດ. | 3,080.00 | 2,800.00 |
| 6 | 0105 | ສັດປີກລ້ຽງມີຊີວິດ, ໝາຍເຖິງ, ໄກ່ຊະນິດແກລລັສໂດເມສຕິກັສ, ເປັດ, ຫ່ານ, ໄກ່ງວງ ແລະ ໄກ່ຕ໋ອກ. | - | 50,550,009.08 |
| | | **ລວມ** | **3,170,084.95** | **77,677,170.84** |
| **II** | | **ຜະລິດຕະພັນແຮ່ທາດ** | | |
| 1 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 43,542,984.19 | 82,730,404.43 |
| 2 | 7801 | ຊືນທີ່ຍັງບໍ່ທັນຂຶ້ນຮູບຮ່າງ (ຫຍາບ). | 5,334,702.20 | - |
| 3 | 7606 | ແຜ່ນ, ແຜ່ນບາງ ແລະ ແຖບເຮັດດ້ວຍອາລູຍມີນຽມ, ທີ່ມີຄວາມໜາເກີນ 0.2 ມມ. | - | - |
| 4 | 8104 | ແມັກນີຊຽມ ແລະ ເຄື່ອງທີ່ເຮັດດ້ວຍແມັກນີຊຽມ, ລວມທັງເສດ ແລະ ສິ່ງແຕກຫັກທີ່ໃຊ້ບໍ່ໄດ້. | - | 3,000.00 |
| 5 | 8003 | ທ່ອນ, ເສັ້ນ, ໂປຣໄຟລ໌ ທີ່ເຮັດດ້ວຍກົ່ວ. | - | 102,395.80 |
| 6 | 8001 | ກົ່ວທີ່ຍັງບໍ່ທັນຂຶ້ນຮູບ (ຫຍາບ). | - | 528,466.24 |
| | | **ລວມ** | **48,877,686.39** | **83,364,266.47** |
| **III** | | **ພືດກະສິກຳ** | | |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼື ບໍ່ກໍ່ຕາມ; ແກນສາຄູ. | 134,035,423.27 | 101,786,911.00 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 2 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອິນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 65,571,710.05 | 34,211,081.97 |
| 3 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 61,318,922.80 | 14,747,972.41 |
| 4 | 0704 | ກະລໍ່າປີ, ດອກກະລໍ່າປີ, ກະລໍ່າກູດ, ຜັກຈໍາພອກ ຜັກກາດຂາວ ແລະພືດຜັກທີ່ຄ້າຍຄືກັນໃນຕະກູນບຣາສສິກາ, ສົດ ຫຼື ແຊ່ເຢັນທີ່ສາມາດບໍລິໂພກໄດ້. | 18,133,649.00 | 30,531,400.00 |
| 5 | 0803 | ໝາກກ້ວຍ, ລວມທັງໝາກໄມ້ຕະກູນກ້ວຍ, ສົດ ຫຼື ແຫ້ງ. | 14,015,259.10 | 22,081,817.48 |
| 6 | 0810 | ໝາກໄມ້ອື່ນໆ, ສົດ. | 11,063,582.94 | 9,133,043.70 |
| 7 | 1202 | ຖົ່ວດິນ, ບໍ່ທັນຂົ້ວ, ຫຼື ບໍ່ທັນເຮັດໃຫ້ສຸກໂດຍວິທີອື່ນ, ຈະເອົາເປືອກອອກ ຫຼື ບົດແຕກແລ້ວ ຫຼື ບໍ່ກໍ່ຕາມ. | 9,070,264.14 | 6,439,498.74 |
| 8 | 1006 | ເຂົ້າ. | 8,931,706.39 | 46,685,964.71 |
| 9 | 1005 | ເຂົ້າສາລີ (ເຂົ້າໂພດ). | 7,524,550.00 | 9,156,500.00 |
| 10 | 3105 | ປຸ໋ຍແຮ່ທາດ ຫຼື ປຸ໋ຍເຄມີ ທີ່ປະກອບດ້ວຍສອງ ຫຼື ສາມສານສ່ວນປະກອບຂອງສານໄນໂຕຣເຈນ, ຟອສຟໍຣັສ ແລະ ໂພແທສຊຽມອື່ນໆສໍາຫຼັບການຟື້ນຟູດິນ; ຜະລິດຕະພັນຂອງໝວດນີ້ຈັດແຕ່ງໃນຮູບເມັດ ຫຼື ຄ້າຍຄືກັນ ຫຼື ສິ່ງຫຸ້ມຫໍ່ທີ່ມີນໍ້າໜັກລວມບໍ່ເກີນ 10 ກິໂລກຣາມ. | 7,151,695.97 | 7,824,822.65 |
| 11 | 1212 | ໝາກຖົ່ວໂລຄັສທ໌, ສາຫຼ່າຍທະເລ ແລະ ສາຫຼ່າຍທະເລອື່ນໆ, ຜັກກາດຫວານທີ່ໃຫ້ນໍ້າຕານ ແລະ ອ້ອຍສົດ, ແຊ່ເຢັນແຊ່ແຂງ ຫຼື ແຫ້ງ, ຈະບົດເປັນຜົງ ຫຼື ບໍ່ກໍ່ຕາມ; ເມັດແຂງ ແລະ ເນື້ອໃນຂອງແກ່ນໝາກໄມ້ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຈາກພືດຜັກ (ລວມທັງຣາກຊິໂຄຣິບໍ່ທັນຂົ້ວ, ຊະນິດຊິໂຄຣຽມ ອິນທີບັສຊາຕິວຸມ) ໃຊ້ເປັນອາຫານຄົນເປັນຕົ້ນຕໍ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ. | 6,394,961.44 | 2,581,154.16 |
| 12 | 0706 | ຫົວກາຣົດ, ຫົວເທີ໌ນິບ, ຫົວບີບທີ່ໃຊ້ເຮັດສະລັດ, ສານຊິໄຟ, ເຊເລຣີເອກ, ຫົວຜັກກາດຂາວ ແລະ ຫົວຂອງພືດທີ່ຄ້າຍຄຽງກັນ, ສົດ ຫຼື ແຊ່ເຢັນ. | 3,910,486.00 | 5,703,600.00 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 13 | 0813 | ໝາກໄມ້ແຫ້ງ, ນອກຈາກໝາກໄມ້ຊະນິດທີ່ບົ່ງໄວ້ແຕ່ລະຫັດເຄົ້າ 08.01 ຫາ 08.06; ລວມທັງຖົ່ວເປືອກແຂງ ແລະ ໝາກໄມ້ແຫ້ງຢູ່ໃນໝວດນີ້ປະສົມກັນ. | 2,544,232.44 | 238,271.28 |
| 14 | 1211 | ຕົ້ນໄມ້ ແລະ ພາກສ່ວນຂອງຕົ້ນໄມ້ (ລວມທັງເມັດ ແລະ ໝາກໄມ້), ຊະນິດທີ່ໃຊ້ຕົ້ນຕໍໃນການເຄື່ອງນໍ້າຫອມ, ໃນທາງການຢາ ຫຼື ໃຊ້ໃນການຂ້າແມງໄມ້, ຢາຂ້າເຊື້ອຣາ ຫຼື ຈຸດປະສົງທີ່ຄ້າຍຄືກັນ, ສົດ, ແຊ່ແຂງ ຫຼື ແຫ້ງ,ຈະຕັດ ຫຼື ບົດ ຫຼື ເຮັດເປັນຜົງລະອຽດແລ້ວ ຫຼື ບໍ່ກໍ່ຕາມ. | 2,432,678.72 | 16,044,465.18 |
| 15 | 1008 | ເຂົ້າບັກວີດ, ເຂົ້າຟາງນົກເຂົາ ແລະ ເຂົ້ານົກ; ເມັດທັນຍະພືດອື່ນໆ. | 2,157,532.50 | 2,654,210.00 |
| 16 | 0802 | ຖົ່ວເປືອກແຂງອື່ນໆ, ສົດ ຫຼື ແຫ້ງ, ຈະເອົາເປືອກອອກ ຫຼື ບໍ່ກໍ່ຕາມ. | 2,013,734.00 | 1,197,972.30 |
| 17 | 0801 | ໝາກພ້າວ, ຖົ່ວເປືອກແຂງພັນບຣາຊິລ, ແກ່ນໝາກມ່ວງຫິມະພານ, ສົດ ຫຼື  ແຫ້ງ, ບໍ່ມີເປືອກ ຫຼື ແກະເອົາເປືອກອອກ ຫຼື ບໍ່ກໍ່ຕາມ. | 1,346,882.69 | 843,682.08 |
| 18 | 0713 | ພືດຜັກຕະກູນຖົ່ວ, ເອົາເປືອກອອກ, ຈະເອົາເຍື່ອອອກ ຫຼື ເຮັດໃຫ້ແຍກອອກຈາກກັນ ຫຼື ບໍ່ກໍ່ຕາມ. | 1,111,100.00 | 1,626,310.00 |
| 19 | 1104 | ເມັດທັນຍາພືດທີ່ຈັດແຕ່ງໂດຍວິທີອື່ນ (ຕົວຢ່າງ, ເອົາເປືອກອອກ, ເຮັດໃຫ້ແປ, ເຮັດເປັນເກັດ, ຝານ ຫຼື ບົດແຫຼກເປັນຕົ້ນ), ຍົກເວັ້ນເມັດເຂົ້າຢູ່ຕາມລະຫັດເຄົ້າ 10.06; ໜໍ່ທັນຍາພືດ, ທັງໝົດ, ເຮັດໃຫ້ແປ, ເປັນເກັດ, ໂມ້ ຫຼື ບົດມຸ່ນ. | 913,762.80 | 3,884,309.50 |
| 20 | 1207 | ແກ່ນພືດ ແລະ ແກ່ນໝາກໄມ້ອື່ນໆ ທີ່ມີນໍ້າມັນ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ. | 670,957.00 | 1,750,412.00 |
| 21 | 0711 | ຜັກທີ່ຮັກສາໄວ້ຊົ່ວຄາວ (ຕົວຢ່າງ, ດ້ວຍແກັສຊັນເຟີໄດອອກໄຊດ໌ ຫຼື ແຊ່ນໍ້າເກືອ, ໃນກໍາມະຖັນຫຼືສານອື່ນໆໃຊ້ສໍາລັບຮັບປະກັນໃນການຮັກສາຊົ່ວຄາວເປັນຕົ້ນ), ແຕ່ໃນສະພາບດັ່ງກ່າວນີ້ແມ່ນບໍ່ເໝາະແກ່ການບໍລິໂພກໃນທັນທີ. | 359,199.00 | 608,811.00 |
| 22 | 0709 | ພືດຜັກອື່ນໆ, ສົດ ຫຼືແຊ່ເຢັນ. | 324,877.60 | 3,598,906.40 |
| 23 | 0805 | ໝາກໄມ້ຈໍາພວກໝາກກ້ຽງ, ສົດ ຫຼື ແຫ້ງ. | 314,133.92 | 303,334.68 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 24 | 0910 | ຂີງ, ຫຍ້າຝຣັ່ນ, ຂີ້ໝິ້ນ (ເຄີຄິວມາ), ຕົ້ນໄທມ໌, ໃບເບ, ຜົງກະຫຼີ່ ແລະ ເຄື່ອງເທດອື່ນໆ. | 246,660.00 | 6,207,827.79 |
| 25 | 0811 | ໝາກໄມ້, ຖົ່ວເປືອກແຂງ, ບໍ່ທັນສຸກ ຫຼື ເຮັດໃຫ້ສຸກດ້ວຍການຕົ້ມ ຫຼື ດ້ວຍອາຍນໍ້າ, ແຊ່ແຂງ, ຈະໃສ່ນໍ້າຕານ ຫຼື ສານຫວານອື່ນ ຫຼື ບໍ່ກໍ່ຕາມ. | 171,236.72 | 3,164,584.00 |
| 26 | 0902 | ຊາຈະປຸງແຕ່ງກິ່ນ ຫຼືບໍ່ກໍ່ຕາມ. | 161,100.75 | 468,480.24 |
| 27 | 0908 | ໝາກຈັນເທດ, ດອກຈັນເທດ, ອາມອມ ແລະ ໝາກແໜ່ງ. | 116,478.00 | 156,835.00 |
| 28 | 0603 | ດອກໄມ້ ແລະດອກໄມ້ຈູມຊະນິດທີ່ເໝາະສໍາລັບໄວ້ຕົບແຕ່ງເປັນຊໍ່ດອກໄມ້ ຫຼື ເພື່ອການປະດັບ, ສົດ, ແຫ້ງ, ຍ້ອມສີ, ເຄືອບ, ອາບຊຶມ ຫຼືຕົບແຕ່ງດ້ວຍວິທີອື່ນ. | 94,384.68 | 8,152.86 |
| 29 | 1209 | ເມັດ, ໝາກໄມ້ ແລະ ເກສອນ, ສໍາລັບແນວພັນປູກ. | 81,898.00 | - |
| 30 | 0904 | ພິກໄທໃນຕະກູນໄປເປີຣ໌ລວມທັງໝາກພິກໃນຕະກູນແຄບຊິກໍາ ຫຼື ຕະກູນພິເມນຕາ; ທີ່ແຫ້ງ, ບົດ ຫຼືເຮັດເປັນຜົງ. | 79,874.97 | 5,483,438.85 |
| 31 | 0604 | ໃບໄມ້, ງ່າໄມ້ ແລະສ່ວນອື່ນຂອງຕົ້ນໄມ້, ທີ່ບໍ່ມີດອກ ຫຼື ມີດອກ, ຈູມຕິດ ແລະຫຍ້າ, ຫຍ້າມອສ ແລະ ຫຍ້າໄລເຄນ, ທີ່ເໝາະສໍາລັບຕົບແຕ່ງເປັນຊໍ່ດອກໄມ້ ຫຼືເພື່ອການປະດັບ, ສົດ, ແຫ້ງ, ຍ້ອມສີ, ເຄືອບ, ອາບຊຶມ ຫຼື ຕົບແຕ່ງຢ່າງດ້ວຍວິທີອື່ນ. | 36,550.00 | 15,000.00 |
| 32 | 0712 | ພືດຜັກແຫ້ງ, ທັງຕົ້ນ ຫຼື ທັງຫົວ, ຕັດເປັນສ່ວນ, ເປັນຕ່ອນ, ບົດ ຫຼື ບົດເປັນຜົງລະອຽດກໍ່ຕາມ, ແຕ່ບໍ່ທັນປຸງແຕ່ງເປັນຢ່າງອື່ນ. | 21,044.00 | 200,073.00 |
| 33 | 0602 | ຕົ້ນໄມ້ທີ່ມີຊີວິດອື່ນ (ລວມທັງຮາກ), ງ່າຕອນ ແລະ ແໜງຕອນ, ເຊື້ອເຫັດ. | 5,462.00 | - |
| 34 | 0703 | ຫົວຜັກບົ່ວໃຫຍ່, ຫົວຜັກບົ່ວນ້ອຍ, ຫົວຜັກທຽມ, ຜັກຫອມບົ່ວ ແລະ ຜັກຈໍາພວກຜັກທຽມອື່ນໆ, ສົດ ຫຼື ແຊ່ເຢັນ. | 4,754.48 | - |
| 35 | 1208 | ແປ້ງ ແລະ ແປ້ງຫຍາບທີ່ເຮັດຈາກເມັດພືດ ຫຼື ໝາກໄມ້ທີ່ມີນໍ້າມັນ, ນອກຈາກທີ່ໄດ້ຈາກມັສຕາດ. | 3,279.51 | 2,490.89 |
| 36 | 0807 | ໝາກແຕງເມລ່ອນ (ລວມທັງໝາກໂມ) ແລະ ໝາກຫຸ່ງ, ສົດ. | 882.00 | 16,352.00 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 37 | 0601 | ຫົວ, ຫນໍ່, ເຫງົ້າ, ຮາກ, ຕຸ່ມຕາ ແລະ ແໜງ, ທີ່ຍັງບໍ່ທັນງອກ, ທີ່ງອກ ຫຼືອອກດອກ; ຕົ້ນແລະຮາກຊີກໍເຣ ນອກຈາກຮາກທີ່ບົ່ງໄວ້ຕາມລະຫັດເຄົ້າ 12.12. | | 97,903.48 |
| 38 | 1201 | ຖົ່ວເຫຼືອງ, ຈະບົດແຕກແລ້ວ ຫຼື ບໍ່ກໍ່ຕາມ. | | 64,221.84 |
| 39 | 3301 | ນ້ຳມັນຍອດຫົວ (ຈະມີເທີຣ໌ພີນ ຫຼື ບໍ່ກໍ່ຕາມ), ລວມທັງນ້ຳຄອນກີດ ແລະແອບໂຊລູດ; ຢາງໄມ້; ສິ່ງລະລາຍຂອງນ້ຳມັນຍອດຫົວຢູ່ໃນໄຂ, ນ້ຳມັນລະເຫີຍຍາກ, ໄຂເຜີ້ງ ຫຼື ວັດຖຸຄ້າຍຄຽງດ້ວຍວິທີເອນຟລູ-ເຣຈ໌ເຊີເຣຊຸ້ນຜະລິດຕະພັນເທີຣ໌ພີນີກທີ່ໄດ້ຕາມມາມີລັກສະນະເສດເຫຼືອ ຂອງກຳມະວິທີແຍກເທີຣ໌ພີນີກ ອອກຈາກນ້ຳມັນຍອດຫົວ; ນ້ຳກັ່ນທີ່ມີກິ່ນຫອມຜ່ານກຳມະວິທີສະກັດ ແລະສານລະລາຍຂອງນ້ຳມັນຍອດຫົວ. | | 23,499.00 |
| | | **ລວມ** | **362,334,906.88** | **339,543,310.19** |
| **IV** | | **ຫັດຖະກຳ** | | |
| 1 | 5513 | ແຜ່ນແພທີ່ເຮັດດ້ວຍເສັ້ນໄຍສັ້ນສັງເຄາະ, ທີ່ມີເສັ້ນໄຍດັ່ງກ່າວນ້ອຍກວ່າ 85% ໂດຍນ້ຳໜັກ, ປະສົມດ້ວຍຝ້າຍລ້ວນໆ ຫຼື ເປັນສ່ວນໃຫຍ່, ໜັກບໍ່ເກີນ 170 ກຣາມ/ມ2. | 5,550,250.00 | 4,498,270.00 |
| 2 | 5209 | ຜ້າຕໍ່າທີ່ເຮັດດ້ວຍຝ້າຍ, ທີ່ມີຝ້າຍຕັ້ງແຕ່ 85% ຂຶ້ນໄປໂດຍນ້ຳ ໜັກ ແລະ ມີນ້ຳໜັກບໍ່ເກີນ 200 ກຣາມ/ມ2. | 4,573.80 | - |
| 3 | 4602 | ເຄື່ອງຖັກສານ, ເຄື່ອງສານ ແລະ ເຄື່ອງອື່ນໆ, ທີ່ເຮັດເປັນຮູບຊົງໂດຍກົງຈາກວັດຖຸຈັກສານ ຫຼື ເຮັດມາຈາກເຄື່ອງຂອງທີ່ລະບຸໄວ້ໃນລະຫັດເຄົ້າ 46.01; ເຄື່ອງເຮັດດ້ວຍຮັງບອບ (ລູບຟາ). | - | 3,800.00 |
| | | **ລວມ** | **5,554,823.80** | **4,502,070.00** |
| **V** | | **ອຸດສາຫະກຳ** | | |
| 1 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄີລ ແລະ ຢາງກາທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 164,949,594.79 | 88,039,571.54 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 2 | 6203 | ຊຸດສູດສໍາລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 80,094,186.58 | 65,785,912.62 |
| 3 | 2523 | ຊີເມັນ ພອດແລນ, ຊີເມັນ ອະລູມີນັສ, ຊີເມັນສະແລັກ, ຊີເມັນ ຊູເປີຣ໌ຊັລເຟດທ໌ ແລະ ຊີເມັນໄຮດຣໍລິກ ທີ່ຄ້າຍຄືກັນ, ຈະແຕ່ງສີ ຫຼື ເປັນຊີເມັນເມັດ (ຄລິງເກີຣ໌) ຫຼື ບໍ່ກໍ່ຕາມ. | 69,618,065.48 | 57,450,727.28 |
| 4 | 1701 | ນໍ້າຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນໍ້າຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 65,964,217.00 | 40,319,992.32 |
| 5 | 3901 | ໂພລີເມີຣ໌ຂອງເອທີລີນ, ໃນຮູບແບບລັກສະນະຂັ້ນຕົ້ນ. | 32,650,845.60 | 59,584,169.43 |
| 6 | 1108 | ແປ້ງສະຕາດຈ໌; ແປ້ງອິນູລິນ. | 28,773,845.00 | 13,909,114.20 |
| 7 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 25,746,289.18 | 23,092,333.10 |
| 8 | 2520 | ຫີນກາວຢິບຊໍາ; ແອນໄຮໄດຣທ໌; ພລາສເຕີຣ໌ (ຊຶ່ງປະກອບດ້ວຍຫີນກາວຢິບຊໍ້າທີ່ຜ່ານການເຜົາໃໝ້ ຫຼື ແຄລຊຽມຊັລເຟດທ໌) ຈະແຕ່ງສີ ຫຼື ຕື່ມຕົວເລັ່ງ ຫຼື ຕົວກົດໜ່ວງ ໃນປະລິມານນ້ອຍ ຫຼື ບໍ່ກໍ່ຕາມ. | 15,671,295.21 | 6,407,098.40 |
| 9 | 6205 | ເສື້ອເຊີດທ໌ ສໍາລັບຜູ້ຊາຍ ຫຼື ເດັກຊາຍ. | 13,558,627.95 | 5,606,379.38 |
| 10 | 6204 | ຊຸດສູດ ສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງ ທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 13,211,040.91 | 9,742,543.62 |
| 11 | 8544 | ເສັ້ນລວດ ແລະ ເຄເບິລ (ລວມທັງເຄເບິລຮ່ວມແກ່ນ) ທີ່ຫຸ້ມດ້ວຍວັດຖຸຕ້ານກັບການຮົ່ວຂອງກະແສສໍາລັບໄຟຟ້າ (ລວມເຖິງຊະນິດທີ່ເຄືອບດ້ວຍນໍ້າກ້ຽງ ຫຼື ໃສ່ອົກຊີ ຫຼື ບໍ່ກໍ່ຕາມ), ຈະຕິດກັບຂວັ້ນຕໍ່ ຫຼື ບໍ່ກໍ່ຕາມ; ເຄເບິລໃຍນໍາແສງ, ປະກອບດ້ວຍໃຍທີ່ຫຸ້ມປອກແຕ່ລະເສັ້ນ ຈະມີວັດຖຸຕົວນໍາໄຟຟ້າ ຫຼື ຕິດກັບຂວັ້ນຕໍ່ ຫຼື ບໍ່ກໍ່ຕາມ. | 13,191,241.60 | 17,327,243.81 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 12 | 6211 | ຊຸດວອມກິລາ, ຊຸດສຳລັບຫຼິ້ນສະກີ ແລະ ຊຸດລອຍນ້ຳ; ເຄື່ອງນຸ່ງຫົ່ມອື່ນໆ. | 12,273,500.81 | 11,781,083.46 |
| 13 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 11,142,025.55 | 13,266,584.38 |
| 14 | 6105 | ເສື້ອເຊີດທ໌ສຳລັບຜູ້ຊາຍ ຫຼື ເດັກຊາຍ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 9,998,838.83 | 3,566,991.97 |
| 15 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 9,845,367.76 | 11,934,800.95 |
| 16 | 2202 | ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານ ອື່ນໆ ຫຼື ແຕ່ງກິ່ນ ແລະ ເຄື່ອງດື່ມອື່ນໆ ບໍ່ມີທາດເຫຼົ້າ, ແຕ່ບໍ່ລວມເອົານ້ຳໝາກໄມ້ ຫຼື ນ້ຳພືດຜັກຂອງລະຫັດເຄົ້າ 20.09. | 9,017,589.85 | 17,885,188.30 |
| 17 | 2827 | ຄລໍໄຣດ໌, ຄລໍໄຣດ໌ ອອກໄຊດ໌ ແລະຄລໍໄຣດ໌ໄຮດຣອກໄຊດ໌; ໂບຣໄມດ໌ ແລະໂບຣໄມດ ອອກໄຊດ໌; ໄອໂອໄດດ໌ ແລະ ໄອໂອໄດດ໌ ອອກໄຊດ໌. | 8,612,995.60 | 767,219.20 |
| 18 | 6107 | ໂສ້ງຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງນອນ, ຊຸດນຸ່ງ ນອນ, ເສື້ອຄຸມອາບນ້ຳ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 7,719,005.39 | 8,885,067.43 |
| 19 | 3307 | ສິ່ງປຸງແຕ່ງສຳລັບກຽມແຖ, ການແຖ ຫຼື ຫຼັງການແຖ, ສິ່ງດັບກິ່ນຮ່າງກາຍ, ສິ່ງປຸງແຕ່ງສຳລັບການອາບນ້ຳ, ສິ່ງຖອນຂົນ ແລະ ຜະລິດຕະພັນນ້ຳຫອມອື່ນໆ, ເຄື່ອງສຳອາງປຸງແຕ່ງແລ້ວ ຫຼື ສິ່ງປຸງແຕ່ງດ້ານສຸຂະອະນາໄມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ; ສິ່ງດັບກິ່ນໃນຫ້ອງ, ຈະມີສານຫອມ ຫຼື ຈະມີຄູນສົມບັດຂ້າເຊື້ອ ຫຼື ບໍ່ກໍ່ຕາມ. | 6,889,205.11 | 11,788,947.63 |
| 20 | 6505 | ໝວກ ແລະ ເຄື່ອງສຸບຫົວອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊດທ໌ ຫຼື ເຮັດຈາກຜ້າຂອບດອກໄມ້, ສັກກະຫຼາດ ຫຼື ຜະລິດຕະພັນແຜ່ນແພອື່ນໆທີ່ເປັນແຜ່ນແພອື່ນໆ ທີ່ເປັນຜືນ (ບໍ່ແມ່ນເປັນແຖບ), ຈະຕົບແຕ່ງ ຫຼື ບໍ່ກໍ່ຕາມ, ລວມທັງຕາໜ່າງຄຸມຜົມ, ຈະເຮັດດ້ວຍວັດຖຸໃດກໍ່ຕາມ, ຕົບແຕ່ງ ຫຼື ປະດັບເຄື່ອງປະກອບ ຫຼື ບໍ່ກໍ່ຕາມ. | 6,789,881.46 | 27,808.35 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 21 | 9401 | ຕັ່ງນັ່ງ (ນອກຈາກປະເພດທີ່ລະບຸໄວ້ໃນລະຫັດເຄົ້າ 94.02), ຈະປັບເປັນຕຽງໄດ້ ຫຼື ບໍ່ກໍ່ຕາມ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. | 6,617,349.31 | 11,245,591.80 |
| 22 | 6201 | ເສື້ອໂອເວີຣ໌ໂຄດ ສໍາລັບຜູ້ຊາຍ ຫຼື ເດັກຊາຍ, ຜ້າຄຸມລົດ, ຜ້າຄຸມໄຫຼ່, ເສື້ອຄຸມແບບຫຼຶມໆ, ເສື້ອກັນໜາວທີ່ມີໝວກຕິດຢູ່ນໍາ (ລວມທັງເສື້ອແຈັກເກັດສໍາລັບຫຼິ້ນສະກີ), ເສື້ອກັນລົມ, ເສື້ອແຈັກເກັດກັນລົມ ແລະ ສິ່ງທີ່ຄ້າຍຄຽງກັນ, ນອກຈາກເຄື່ອງຕາມລະຫັດເຄົ້າ 62.03 | 5,722,970.65 | 4,948,707.90 |
| 23 | 2401 | ຢາສູບທີ່ບໍ່ທັນຜ່ານຂະບວນການຜະລິດ; ເສດຢາສູບ. | 5,444,730.80 | 4,847,199.00 |
| 24 | 1703 | ກາກນໍ້າຕານ ທີ່ໄດ້ມາຈາກການສະກັດ ຫຼື ການກັ່ນນໍ້າຕານ. | 4,541,056.89 | 3,507,592.03 |
| 25 | 2101 | ສິ່ງສະກັດ, ຫົວເຊື້ອ ຫຼື ສິ່ງສະກັດເຂັ້ມຂຸ້ນ, ທີ່ໄດ້ຈາກກາເຟ, ຊາ ຫຼື ຊາມາເຕ ແລະ ການປຸງແຕ່ງຈາກຜະລິດຕະພັນເຫຼົ່ານີ້ ເປັນຕົ້ນຕໍ ທີ່ມີກາເຟ, ຊາ ຫຼື ຊາມາເຕ; ຊິໂຄຣີທີ່ຂົ້ວແລ້ວ ແລະ ສິ່ງທົດແທນກາເຟທີ່ຂົ້ວແລ້ວ, ສິ່ງສະກັດ, ຫົວຊື້ອ ແລະ ສິ່ງສະກັດເຂັ້ມຂຸ້ນຂອງສິ່ງດັ່ງກ່າວ. | 4,480,850.27 | 5,962,937.14 |
| 26 | 9025 | ໄຮໂດຣມິເຕີ ແລະ ອຸປະກອນທີ່ຄ້າຍຄຽງ, ເທີໂມມິເຕ, ໄພໂຣມິເຕີ, ບາໂຣມິເຕີ, ໄຮໂກຣມິເຕີ, ໄຊໂກຣມິມໍ່ເຕີ, ຈະບັນທຶກໄດ້ ຫຼື ບໍ່ກໍ່ຕາມ, ຈະປະກອບເຂົ້າກັນ ຫຼື ບໍ່ກໍ່ຕາມ. | 4,221,667.96 | 2,959,376.54 |
| 27 | 6108 | ໂສ້ງສະລິບສໍາລັບແມ່ຍິງ ຫຼື ເດັກຍິງ, ກະໂປ່ງຊ້ອນໃນ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງ ນອນ, ຊຸດນຸ່ງນອນ, ຊຸດບາງເຫັນເນື້ອ, ເສື້ອຄຸມອາບນໍ້າ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງ ຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣ ເຊັດທ໌. | 3,709,779.75 | 2,812,071.88 |
| 28 | 6104 | ຊຸດສູດສໍາລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງລວມຊຸມ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດເສື້ອກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນໍ້າ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 3,303,292.38 | 5,125,824.68 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 29 | 2008 | ໝາກໄມ້, ຖົ່ວເປືອກແຂງ ແລະ ສ່ວນອື່ນໆ ທີ່ ບໍລິໂພກໄດ້ຂອງຕົ້ນໄມ້, ທີ່ຜ່ານການປຸງແຕ່ງ ຫຼື ຮັກສາໄວ້ບໍ່ໃຫ້ເສຍຄຸນດ້ວຍວິທີອື່ນ, ຈະໃສ່ນ້ຳ ຕານ ຫຼື ສານຫວານ ອື່ນໆ ຫຼື ເຫຼົ້າ ຫຼື ບໍ່ກໍ່ຕາມ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ. | 3,245,263.73 | 1,921,560.60 |
| 30 | 9032 | ເຄື່ອງອຸປະກອນ ແລະ ເຄື່ອງມືສຳລັບບັງຄັບ ຫຼື ຄວບຄຸມໂດຍອັດຕະໂນມັດ. | 3,240,819.63 | 2,160,248.24 |
| 31 | 3902 | ໂພລິເມີຣ໌ຂອງໂພຣພີລີນ ຫຼື ໂອລີຟີນອື່ນໆ, ໃນ ຮູບແບບລັກສະນະຂັ້ນຕົ້ນ. | 3,056,072.54 | 1,337.16 |
| 32 | 6103 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງທີ່ ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອ ເບລ ເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດ ບ່າ, ໂສ້ງຂາສາມ ສ່ວນ, ໂສ້ງຂາສັ້ນ (ນອກຈາກ ໂສ້ງນຸ່ງອາບນ້ຳ), ທີ່ຖັກແບບນິດ ຫຼື ແບບໂຄຣ ເຊັດທ໌. | 2,504,700.39 | 2,927,568.85 |
| 33 | 4202 | ຫີບເດີນທາງຂະໜາດໃຫຍ່, ຫີບໃສ່ເສື້ອຜ້າ ແລະ ຫີບນ້ອຍໃສ່ເຄື່ອງອື່ນໆ, ກະເປົານັກບໍລິຫານ, ກະເປົາເອກະສານ, ກະເປົາໜັກຮຽນ, ກັບໃສ່ ແວ່ນຕາ,ກັບໃສ່ກ້ອງສ່ອງທາງໄກ, ກັບໃສ່ກ້ອງ ຖ່າຍຮູບ, ຖົງໃສ່ກ້ອງຖ່າຍວີດີໂອ, ຫີບໃສ່ເຄື່ອງ ດົນຕີ ຫຼື ຫີບໃສ່ອາວຸດ, ຊິບໃສ່ອາວຸດ ແລະ ພາ ສະນະທີ່ຄ້າຍຄຽງ. | 2,470,745.14 | 230,474.46 |
| 34 | 8536 | ເຄື່ອງອຸປະກອນໄຟຟ້າຕ່າງໆ ສາລັບຕັດຕໍ່ ຫຼື ປ້ອງ ກັນວົງຈອນໄຟຟ້າ ຫຼື ສຳລັບຕໍ່ກັບ ວົງຈອນໄຟຟ້າ ຫຼື ຕໍ່ພາຍໃນວົງຈອນໄຟຟ້າ (ຕົວຢ່າງ, ສະວິກໄຟ ຟ້າ, ຕົວຖ່າຍ ທອດ ຕໍ່, ຟິວສ໌, ຕົວຕັດວົງຈອນ, ຕົວຂະຫຍາຍຄື້ນ, ປັກສຽບ, ຮູປັກສຽບ, ຫົວສຸບ ດອກໄຟ, ຕູ້ຈັບ ສາຍໄຟຟ້າ), ສຳລັບແຮງດັນ ໄຟຟ້າບໍ່ເກີນ 1000ໂວນ; ລວມທັງ ຂໍ້ຕໍ່ສຳລັບ ເສັ້ນໃຍນຳແສງ, ກຸ່ມເສັ້ນໃຍນຳແສງ ຫຼື ສຳລັບເຄ ເບີລເສັ້ນໃຍນຳແສງ. | 2,309,040.00 | - |
| 35 | 6202 | ເສື້ອໂອເວີຣ໌ໂຄດ ສຳລັບແມ່ຍິງ ຫຼື ເດັກຍິງ, ຜ້າ ຄຸມລົດ, ຜ້າຄຸມໄຫຼ່, ເສື້ອຄຸມແບບ ຫຼືມໆ, ເສື້ອ ກັນໜາວມີໝວກຕິດຢູ່ນຳ (ລວມທັງເສື້ອແຈັກ ເກັດສຳລັບຫຼິ້ນສະກີ), ເສື້ອ ກັນລົມ, ເສື້ອແຈັກ ເກັດກັນລົມ ແລະ ສິ່ງຄ້າຍຄຽງກັນ, ນອກຈາກ ເຄື່ອງລາວໃນລະຫັດເຄົ້າ62.04. | 2,240,890.75 | 3,498,031.67 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 36 | 6206 | ເສື້ອບລາວສ໌ ສຳລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌. | 2,116,755.25 | 47,060,039.50 |
| 37 | 8543 | ເຄື່ອງຈັກໄຟຟ້າ ແລະ ເຄື່ອງອຸປະກອນໄຟຟ້າ, ທີ່ມີໜ້າທີ່ເຮັດວຽກສະເພາະຕົວ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ທີ່ອື່ນໃນໝວດນີ້. | 2,100,000.00 | - |
| 38 | 8504 | ໝໍ້ແປງໄຟຟ້າ, ເຄື່ອງປ່ຽນໄຟຟ້າຊະນິດຢູ່ຄົງທີ່, (ຕົວຢ່າງ, ເຄື່ອງປັບກະແສໄຟຟ້າ) ແລະ ຕົວໜ່ຽວນຳ. | 1,842,576.66 | 752,307.06 |
| 39 | 7108 | ຄຳ (ລວມທັງຄຳຍ້ອມດ້ວຍຄຳຂາວ) ຍັງບໍ່ທັນຕີບແຕ່ງເປັນຮູບຮ່າງ ຫຼື ຢູ່ໃນລັກຊະນະເຄິ່ງສຳເລັດຮູບ ຫຼື ເປັນຜົງ. | 1,841,295.76 | - |
| 40 | 6307 | ເຄື່ອງສຳເລັດຮູບອື່ນໆ, ລວມທັງແມ່ແບບຕັດເຄື່ອງນຸ່ງຫົ່ມ. | 1,741,626.32 | 1,431,373.26 |
| 41 | 3208 | ສີທາ ແລະ ສີວານິສ໌ (ທີ່ມີອີນາເມລ ແລະ ແລັກເກີຣ໌) ທີ່ມີໂພລີເມີຣ໌ສັງເຄາະ ຫຼື ຖືກດັດແປງດ້ວຍໂພລີເມີຣ໌ທຳມະຊາດ, ກະຈາຍ ຫຼື ລະລາຍໃນສິ່ງທີ່ບໍ່ແມ່ນທາດແຫຼວ, ທີ່ໄດ້ລະບຸໄວ້ໃນຂໍ້ແນະນຳ 4 ຂອງໝວດນີ້. | 1,662,739.94 | 513,944.60 |
| 42 | 6212 | ເສື້ອຊ້ອນໃນຜູ້ຍິງ, ສິ້ງຊ້ອນໃນທີ່ມີສາຍຮັດແອວ ແລະ ສະໂພກ, ເສື້ອຮັດຕົວ, ສາຍພາຍ, ສາຍຈ່ອງຫົວໂສ້ງ, ສາຍຢາງຮັດຂາ ແລະ ສິ່ງຄ້າຍຄຽງ ແລະ ສິ້ນສ່ວນປະກອບ ຂອງເຄື່ອງດັ່ງກ່າວ, ຈະຖັກແບບນິດ ຫຼື ແບບໂຄຣເຊັດທ໌ ຫຼື ບໍ່ກໍ່ຕາມ. | 1,661,347.33 | 2,281,282.51 |
| 43 | 6106 | ເສື້ອບລາວສ໌ ສຳລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌, ທີ່ຖັກ ແບບນິດ ຫຼື ແບບໂຄຣເຊັດທ໌. | 1,575,403.83 | 1,355,637.75 |
| 44 | 6404 | ເກີບທີ່ມີພື້ນດ້ານນອກເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ສ່ວນຂ້າງເທິງຂອງເກີບເຮັດດ້ວຍວັດຖຸຕ່ຳແຜ່ນ. | 1,477,836.71 | 505,352.96 |
| 45 | 8507 | ໝໍ້ສະສົມໄຟຟ້າ, ລວມທັງແຜ່ນກັ້ນຂອງສິ່ງດັ່ງກ່າວຈະເປັນຮູບສີ່ຫຼ່ຽມ (ລວມທັງຮູບຈັດຕຸລັດ) ຫຼື ບໍ່ກໍ່ຕາມ. | 1,323,209.83 | 724,390.49 |
| 46 | 3802 | ຄາຣ໌ບອນທີ່ມີລັກສະນະຕຸ້ນໃຫ້ມີພາວະກຳມັນຕະພາບລັງສີ; ຜະລິດຕະພັນທີ່ໄດ້ຈາກແຮ່ທຳມະຊາດທີ່ມີລັກສະນະຊີວິດ, ສິ່ງດຳຈາກສັດ, ລວມທັງສິ່ງດຳຈາກສັດທີ່ໃຊ້ແລ້ວ. | 1,305,037.00 | 430,400.00 |

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | 2019 | 2018 |
|---|---|---|---|---|
| 47 | 3907 | ໂພລີອະຊີທັລ, ໂພລີອີເທີຣ໌ ແລະ ອີພອກໄຊດ໌ເຣຊິນອື່ນໆ, ໃນຮູບລັກສະນະຂັ້ນຕົ້ນ; ໂພລີຄາຣ໌ບໍເນດທ໌, ແອລຄິດ ເຣຊິນ, ໂພລີແອລລີເອສເທີຣ໌ ແລະ ໂພລີເອສເທີຣ໌ ອື່ນໆ, ໃນຮູບລັກສະນະຂັ້ນຕົ້ນ. | 1,182,807.65 | 136,000.00 |
| 48 | 8414 | ເຄື່ອງສູບລົມ ຫຼື ເຄື່ອງສູບສູນຍາກາດ, ເຄື່ອງອັດລົມ ຫຼື ອັດແກັສອື່ນໆ ແລະ ພັດລົມ; ເຄື່ອງລະບາຍອາກາດ ຫຼື ເຄື່ອງໝູນວຽນອາກາດທີ່ມີໃບພັດໃນຕົວ, ຈະມີເຄື່ອງຕອງອາກາດນຳ ຫຼື ບໍ່ກໍ່ຕາມ. | 1,089,072.00 | 162,202.50 |
| 49 | 2203 | ເບຍທີ່ເຮັດຈາກເຂົ້າມອລທ໌. | 974,284.93 | 14,665,312.40 |
| 50 | 9507 | ຄັນເບັດ, ເບັດ ແລະ ອຸປະກອນອື່ນໆ ສຳລັບການຕຶກເບັດ, ສະຫວິງຊ້ອນ ປາ, ສະຫວິງຈັບແມງກະເບື້ອ ແລະ ສະຫວິງທີ່ຄ້າຍຄຽງ ລວມທັງນົກທຽມສຳລັບລໍ້ນົກ (ນອກຈາກທີ່ ໄດ້ລະບຸໄວ້ຕາມລະຫັດເຄົ້າ 92.08 ຫຼື 97.05) ແລະ ເຄື່ອງຈຳເປັນທີ່ຄ້າຍຄຽງກັນສຳລັບການລ່າສັດ ແລະ ຍິງສັດ. | 849,477.33 | 651,854.16 |
